# ຊີວິດການເປັນຢູ່ໃນເຂດຊົນນະບົດໃນຊ່ວງເວລາທີ່ເກີດວິກິດ ການພະຍາດລະບາດ: ຫຼັກຖານຈາກການສຳຫຼວດຊຸມຊົນ

# ເນື້ອໃນ


1. ພາກແນະນຳ ... 2
2. ຊີວິດການເປັນຢູ່ຂອງຄົວເຮືອນ ... 4
   - 2.1 ຊີວິດການເປັນຢູ່ຂອງຄົວເຮືອນກ່ອນມີພະຍາດລະບາດ ... 4
   - 2.2 ຜົນກະທົບຂອງພະຍາດລະບາດແລະອັດຕາເງິນເຟີ້ ... 6
3. ການບໍລິການແລະການຊ່ວຍເຫຼືອຂອງລັດ ... 10
   - 3.1 ການຮັກສາສຸຂະພາບ ... 10
   - 3.2 ການສຶກສາ ... 11
   - 3.3 ການຊ່ວຍເຫຼືອສັງຄົມ ... 12
   - 3.4 ການສື່ສານ ... 13
4. ການມີສ່ວນຮ່ວມຂອງປະຊາຊົນ ... 13
   - 4.1 ຄວາມເພິ່ງພໍໃຈແລະຄວາມຄາດຫວັງກ່ຽວກັບໂຄງລ່າງພື້ນຖານ, ການບໍລິການ, ແລະ ການຊ່ວຍເຫຼືອຂອງລັດ ... 13
   - 4.2 ສຽງຂອງປະຊາຊົນແລະການມີສ່ວນຮ່ວມ ... 17
5. ພາກສະຫຼຸບ ... 18
6. ເອກະສານຊ້ອນທ້າຍ ... 21
   - 6.1 ເຂດທີ່ຢູ່ຂອງຜູ້ໃຫ້ສຳພາດ ... 21
   - 6.2 ຂໍ້ມູນພື້ນຖານຂອງຜູ້ໃຫ້ສຳພາດ ... 23
   - 6.3 ຍຸດທະສາດການຮັບມືກັບວິກິດການ ... 23

**ນີ້ແມ່ນການສຳຫຼວດຊຸມຊົນໂດຍໃຊ້ວິທີການສຳຫຼວດດ້ານຄຸນນະພາບ ເຊິ່ງເປັນສ່ວນໜຶ່ງໃນການລິເລີ່ມ ຕິດຕາມສະຫວັດດີການສັງຄົມ ໃນ ສປປ ລາວ ຂອງທະນາຄານໂລກ.**

**ການສຳຫຼວດນີ້ແນໃສ່ (1) ເພື່ອໃຫ້ມີຄວາມເຂົ້າໃຈດີຂຶ້ນກ່ຽວກັບຜົນກະທົບດ້ານເສດຖະກິດ ແລະ ສັງຄົມ ຈາກການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ສະພາບເສດຖະກິດທີ່ຊຸດໂຊມລົງ, ໂດຍສະເພາະແມ່ນອັດຕາເງິນເຟີ້ ທີ່ເພີ່ມທະວີຂຶ້ນ, ເຊິ່ງສົ່ງຜົນກະທົບຕໍ່ການດຳລົງຊີວິດຢູ່ໃນເຂດຊົນນະບົດ; ແລະ (2) ການສຳຫຼວດນີ້ ແມ່ນເສີມຕື່ມໃສ່ກັບການສຳຫຼວດຕິດຕາມຜ່ານທາງໂທລະສັບແບບໄວຂອງທະນາຄານໂລກ, ເຊິ່ງປະຕິບັດທຸກເຄິ່ງປີ ເພື່ອຕິດຕາມສະຫວັດດີການ ຂອງ ຄົວເຮືອນ.**

**ການສຳຫຼວດນີ້ໄດ້ຮັບທຶນຈາກແຜນງານພາສີສາກົນ. ເກັບກຳຂໍ້ມູນຂອງການສຳຫຼວດ ດ້ວຍການສຳພາດ 139 ຄັ້ງ ແລະ ສຳພາດຕື່ມອີກ 20 ຄັ້ງ ໂດຍບໍລິສັດຄົ້ນຄວ້າ ອິນໂດຈີນ ປະຈຳລາວ. ບົດສະຫຼຸບຫຍໍ້ ແມ່ນຂຽນໂດຍ ທ່ານນາງ ບົວສະຫວັນ ຂັນທະພັດ ແລະ ທ່ານ ເວທະກະ ຈັນທອນ , ເຊິ່ງໄດ້ຮັບການປະກອບຄຳເຫັນຈາກ ທ່ານນາງ ທານິດາ ອາຣາເວຊກິດ, ທ່ານ ຊີໄລຄາ ມີລີເຊັນ ວານເຈີ, ທ່ານ ນາງ ເອເລນາ ຈີອໍກີວາ ອັນໂດໂນວສະຄາ, ແລະ ທ່ານນາງ ເພັດນິດດາ ອວັນຄຳຈັນ.**

## 1. ພາກແນະນຳ

**ປະຊາກອນຂອງ ສປປ ລາວ ແມ່ນອາໄສຢູ່ໃນເຂດຊົນນະບົດເປັນສ່ວນໃຫຍ່.** ເຖິງແມ່ນວ່າການຂະຫຍາຍຕົວ ທາງດ້ານເສດຖະກິດທີ່ໄວວາໄດ້ເລັ່ງໃຫ້ມີການຫັນເປັນຕົວເມືອງໄວຂຶ້ນໃນໄລຍະສາມທົດສະວັດທີ່ຜ່ານມາ, ແຕ່ກໍຍັງມີ 63 ສ່ວນຮ້ອຍຂອງປະຊາກອນຍັງສືບຕໍ່ດຳລົງຊີວິດ ຢູ່ໃນບ້ານເຂດຊົນນະບົດ. ບ້ານ ເປັນຫົວໜ່ວຍບໍລິຫານຂັ້ນທ້ອງຖິ່ນໃນລາວ, ມີການແບ່ງບ້ານອອກເປັນ 3 ໝວດຄື: 1) ບ້ານໃນຕົວເມືອງ; 2) ບ້ານຊົນນະບົດທີ່ມີເສັ້ນທາງເຂົ້າເຖິງ; ແລະ 3) ບ້ານຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ. ແຕ່ລະບ້ານມີນາຍບ້ານທີ່ໄດ້ຮັບການແຕ່ງຕັ້ງຢ່າງເປັນທາງການ, ຫຼື *ນາຍບ້ານ.* ບ້ານຊົນນະບົດມີຄວາມແຕກຕ່າງກັນຫຼາຍ ເມື່ອເບິ່ງຕາມທີ່ຕັ້ງພູມສັນຖານ (ທົ່ງພຽງ, ກາງ, ເນີນສູງ) ແລະ ອົງປະກອບຂອງຊົນເຜົ່າ (ລາວ, ມົ້ງ, ຂະມຸ ແລະ ອື່ນໆ) ທີ່ອາໄສຢູ່ໃນບ້ານ. ຄົນຊົນນະບົດສ່ວນຫຼາຍຍັງອີງໃສ່ການເຮັດກະສິກຳເປັນອາຊີບຕົ້ນຕໍ.

**ເນື່ອງຈາກມີຄວາມຈຳກັດ ໃນການເຂົ້າເຖິງພື້ນຖານໂຄງລ່າງ, ການບໍລິການພື້ນຖານ, ແລະ ໂອກາດໄດ້ຮັບການຈ້າງງານ, ເຮັດໃຫ້ປະຊາຊົນໃນເຂດຊົນນະບົດປະສົບກັບຄວາມທຸກຍາກຫຼາຍກວ່າເຂດຕົວເມືອງ.** ແຕ່ກ່ອນແມ່ນມີຄົນທຸກຍາກເກືອບ 90 ສ່ວນຮ້ອຍ ໃນທົ່ວປະເທດ, ເມື່ອມາຮອດປີ 2018, ອັດຕາຄວາມທຸກຍາກຢູ່ໃນເຂດຊົນນະບົດມີ 23,8 ສ່ວນຮ້ອຍ ໃນຂະນະທີ່ມີພຽງແຕ່ 7 ສ່ວນຮ້ອຍ ຢູ່ໃນເຂດຕົວເມືອງ. ປະຊາຊົນທີ່ອາໄສຢູ່ໃນບັນດາບ້ານຊົນນະບົດທີ່ຫ່າງໄກສອກຫຼີກ, ເຊິ່ງມັກຈຸ້ມຢູ່ເຂດພູພຽງ ແລະ ເຂດພູສູງ, ມັກມີຄວາມຈຳກັດໃນການເຂົ້າເຖິງການບໍລິການພື້ນຖານ ແລະ ພົບກັບບັນຫາການເດີນທາງທີ່ລຳບາກຍ້ອນເສັ້ນທາງບໍ່ດີ. ຕົວຢ່າງ, ເວລາສະເລ່ຍ ໃນການເດີນທາງຈາກບ້ານຊົນນະບົດທີ່ມີເສັ້ນທາງເຂົ້າເຖິງ ໄປຫາໂຮງຫມໍທີ່ໃກ້ທີ່ສຸດ ແມ່ນ 35 ນາທີ, ໃນຂະນະທີ່ ສຳລັບຜູ້ທີ່ອາໄສໃນບ້ານຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ ແມ່ນຕ້ອງໃຊ້ເວລາປະມານຫນຶ່ງຊົ່ວໂມງ. ໂດຍສະເພາະ ແມ່ນບ້ານຊົນນະບົດທີ່ຢູ່ຫ່າງໄກສອກຫຼີກ, ອາດຈະໃຊ້ເວລາຫຼາຍຊົ່ວໂມງໃນການເດີນທາງຈາກບ້ານໄປຫາໂຮງໝໍ.

ກົງກັນຂ້າມ, ເວລາສະເລ່ຍໃນການເດີນທາງຈາກບ້ານໃນຕົວເມືອງໄປຫາໂຮງໝໍແມ່ນປະມານ 10 ນາທີ. ໂອກາດໄດ້ຮັບການຈ້າງງານ ແລະການເຂົ້າເຖິງຕະຫຼາດຍັງມີຄວາມຈຳກັດຫຼາຍໃນຊຸມຊົນຊົນນະບົດ.

**ເຖິງວ່າຈະມີອັດຕາການຄ້າເພີ່ມຂຶ້ນ, ແຕ່ປະຊາກອນໃນເຂດຊົນນະບົດສ່ວນໃຫຍ່ຍັງສືບຕໍ່ດຳລົງຊີວິດດ້ວຍການເຮັດກະສິກຳເພື່ອລ້ຽງຊີບ,** ຫຼາຍກວ່າ 90 ສ່ວນຮ້ອຍຂອງຄົວເຮືອນໃນເຂດຊົນນະບົດ ເຮັດກະສິກຳ, ປະມານ 70 ສ່ວນຮ້ອຍແມ່ນອີງໃສ່ການປູກຝັງເປັນຫຼັກເພື່ອລ້ຽງຊີບ. ການປູກຝັງແມ່ນເຮັດນາເປັນສ່ວນໃຫຍ່, ຊາວກະສິກອນທີ່ປູກເຂົ້າສ່ວນຫຼາຍແມ່ນປູກເພື່ອບໍລິໂພກໃນຄົວເຮືອນ. ໃນປີ 2018, ປະມານ 70 ສ່ວນຮ້ອຍຂອງຄົວເຮືອນແມ່ນເຮັດນາປູກເຂົ້າ, ເຊິ່ງໃນນັ້ນມີພຽງແຕ່ 5 ສ່ວນຮ້ອຍເທົ່ານັ້ນທີ່ຜະລິດເຂົ້າເພື່ອການຄ້າ. ກົງກັນຂ້າມ, ການຜະລິດພືດຊະນິດອື່ນໆ, ໂດຍສະເພາະແມ່ນສາລີ, ມັນຕົ້ນ, ກາເຟ, ຊາ, ຫມາກກ້ຽງ, ແລະ ຢາງພາລາ, ສ່ວນໃຫຍ່ແມ່ນຜະລິດເພື່ອການຄ້າ. ມີເກືອບຮອດ 30 ສ່ວນຮ້ອຍຂອງຄົວເຮືອນກະສິກອນທີ່ໄດ້ປູກພືດທີ່ບໍ່ແມ່ນເຂົ້າເພື່ອການຄ້າ. ຄົວເຮືອນໃນເຂດຊົນນະບົດຍັງເຮັດອາຊີບລ້ຽງສັດ ແລະ ການລ່າສັດ, ຫຼາຍກວ່າ 1/3 ຂອງຄົວເຮືອນເຮັດອາຊີບລ້ຽງສັດໃຫ້ຊີ້ນ ແລະ ສັດປີກ, ຫາປາ, ລ້ຽງສັດນ້ຳ ຫຼື ລ່າສັດ, ເຊິ່ງສ່ວນຫຼາຍແມ່ນລ້ຽງເພື່ອການຄ້າ.

**ນັບແຕ່ປີ 2020 ເປັນຕົ້ນມາ, ເສດຖະກິດຂອງລາວໄດ້ປະເຊີນ ກັບວິກິດການຫຼາຍຢ່າງ ລວມທັງບັນຫາຕ່າງໆທີ່ຕິດພັນກັບການລະບາດຂອງພະຍາດໂຄວິດ-19 ເຊິ່ງເຮັດໃຫ້ເສດຖະກິດມະຫາພາກບໍ່ໝັ້ນຄົງ ແລະ ເຮັດໃຫ້ເກີດໄພເງິນເຟີ້ຮຸນແຮງຂຶ້ນ.** ພາຍຫຼັງການແຜ່ລະບາດຂອງພະຍາດຕິດຕໍ່, ມາດຕະການປິດເມືອງ, ການຈຳກັດການເດີນທາງ, ການປິດຊາຍແດນ, ການປິດໂຮງຮຽນ ແລະ ທຸລະກິດ ເຮັດໃຫ້ມີການສູນເສຍ ວຽກເຮັດງານທຳ ແລະ ລາຍຮັບ ເຊິ່ງສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນເປັນຈຳນວນຫຼວງຫຼາຍ, ພ້ອມທັງມີການປິດຊາຍແດນສາກົນເປັນເວລາດົນເຖິງສອງປີ, ຊຶ່ງຫາກໍ່ເປີດຄືນໃນເດືອນພຶດສະພາ ປີ2022. ນອກຈາກທີ່ມີຜົນກະທົບໂດຍກົງຕໍ່ສຸຂະພາບແລ້ວ, ພະຍາດລະບາດຍັງໄດ້ສົ່ງຜົນໃຫ້ ບໍ່ມີຄວາມສະຖຽນທາງດ້ານເສດຖະກິດມະຫາພາກຫຼາຍຂຶ້ນ. ກ່ອນທີ່ຈະມີການແຜ່ລະບາດຂອງພະຍາດໂຄວິດ, ສັນຍານຂອງຄວາມບໍ່ມີສະຖຽນ ທາງດ້ານ ເສດຖະກິດກໍໄດ້ປາກົດຂຶ້ນແລ້ວ, ໜີ້ສິນສາທາລະນະ, ໜີ້ສິນທີ່ເກີດຈາກການຄ້ຳປະກັນຂອງພາກລັດ, ແລະ ໜີ້ສິນອື່ນໆ ໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ. ງົບປະມານໄດ້ຫຼຸດລົງ, ເຊິ່ງສາເຫດສ່ວນໃຫຍ່ແມ່ນຍ້ອນ ການເກັບລາຍຮັບບໍ່ໄດ້ດີ ແລະ ລາຍຈ່າຍໃນການຊຳລະຫນີ້ສິນເພີ່ມຂຶ້ນ. ຄຽງຄູ່ກັບຜົນກະທົບຂອງການແຜ່ລະບາດຂອງພະຍາດໂຄວິດ, ການຂາດເຂີນເງິນຕາຕ່າງປະເທດ, ມີເງິນຄັງສຳຮອງໜ້ອຍ, ຄວາມຕ້ອງການໃຊ້ເງິນທີ່ສູງ ໄດ້ເຮັດໃຫ້ມູນຄ່າຂອງເງິນກີບລາວຫຼຸດລົງຫຼາຍກວ່າ 80 ສ່ວນຮ້ອຍ ໃນໄລຍະເວລາ ຕັ້ງແຕ່ເດືອນມັງກອນ 2021 ຮອດເດືອນມັງກອນ 2023 .

**ໃນເດືອນທັນວາ 2022, ອັດຕາເງິນເຟີ້ໄດ້ສົ່ງຜົນໃຫ້ລາຄາສິນຄ້າເພີ່ມຂຶ້ນເຖິງຈຸດສູງສຸດໃນຮອບ 2 ທົດສະວັດ, ສາເຫດສ່ວນໃຫຍ່ແມ່ນມາຈາກເງິນກີບອ່ອນຄ່າ ແລະ ລາຄາສິນຄ້າທົ່ວໂລກທີ່ເພີ່ມຂຶ້ນ.** ອັດຕາເງິນເຟີ້ໄດ້ເພີ່ມຂຶ້ນສູງເຖິງ 39,3 ສ່ວນຮ້ອຍ ໃນເດືອນທັນວາ ປີ 2022, ເຊິ່ງເປັນລະດັບສູງສຸດໃນຮອບຫຼາຍກວ່າ 2 ທົດສະວັດທີ່ຜ່ານມາ. ການເພີ່ມຂຶ້ນຂອງລາຄາອາຫານ ແລະ ຄ່າຂົນສົ່ງແມ່ນເປັນປັດໄຈສຳຄັນທີ່ເຮັດໃຫ້ລາຄາສິນຄ້າເພີ່ມຂຶ້ນ, ອັດຕາເງິນເຟີ້ສົ່ງຜົນໃຫ້ລາຄາອາຫານແພງຂຶ້ນຮອດ 45,9 ສ່ວນຮ້ອຍ ແລະ ຄ່າຂົນສົ່ງ (ລວມທັງນ້ຳມັນ) ແພງຂຶ້ນ 50,4 ສ່ວນຮ້ອຍ. ໃນເບື້ອງຕົ້ນ, ອັດຕາເງິນເຟີ້ທີ່ເພີ່ມຂຶ້ນແມ່ນຍ້ອນການຂຶ້ນລາຄານ້ຳມັນເຊື້ອໄຟພາຍໃນປະເທດ, ເຊິ່ງການຂຶ້ນລາຄາດັ່ງກ່າວນີ້ສົ່ງຜົນກະທົບຕໍ່ຕົ້ນທຶນການຜະລິດສິນຄ້າບໍລິໂພກຢ່າງຫຼວງຫຼາຍ, ເຮັດໃຫ້ລາຄາຂາຍຍ່ອຍສູງຂຶ້ນ. ອີກຢ່າງໜຶ່ງຍ້ອນວ່າ ສປປ ລາວ ເພິ່ງພາການນຳເຂົ້າຫຼາຍ, ຄ່າເງິນກີບທີ່ອ່ອນຄ່າລົງໄດ້ເຮັດໃຫ້ລາຄາຂອງສິນຄ້າເພີ່ມຂຶ້ນ.

**ເພື່ອໃຫ້ເຂົ້າໃຈເຖິງຜົນກະທົບຈາກວິກິດການເຫຼົ່ານີ້ ຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນໃນເຂດຊົນນະບົດ ທັງໃນດ້ານເສດຖະກິດ ແລະ ສັງຄົມ, ທະນາຄານໂລກໄດ້ດຳເນີນການສຳຫຼວດຊຸມຊົນໂດຍໃຊ້ວິທີການສຳຫຼວດດ້ານຄຸນນະພາບ.** ການສຳຫຼວດນີ້ໄດ້ກວດເບິ່ງຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ ແລະ ວິກິດການລາຄາເຄື່ອງອຸປະໂພກບໍລິໂພກທີ່ແພງຂຶ້ນ

ໂດຍສຸມໃສ່ ສີ່ ຂົງເຂດ: ( 1) ການດໍາລົງຊີວິດຂອງຄົວເຮືອນ ແລະ ຍຸດທະສາດການຮັບມືຂອງເຂົາເຈົ້າ; (2) ການຊ່ວຍເຫຼືອທາງສັງຄົມ (3) ການບໍລິການຂອງລັດ; ແລະ (4) ການບໍລິການບໍລິຫານ ແລະ ການມີສ່ວນຮ່ວມຂອງປະຊາຊົນ. ໃນເດືອນພຶດສະພາ ຫາເດືອນກໍລະກົດ 2022, ໄດ້ມີການສໍາພາດຜູ້ໃຫ້ຂໍ້ມູນຫຼັກ 139 ຄົນໃນ 70 ບ້ານໃນ 6 ແຂວງ. ໃນເດືອນພະຈິກ 2022, ກໍໄດ້ເຮັດການສໍາພາດຕື່ມອີກ 20 ຄົນເພື່ອເກັບກໍາຂໍ້ມູນເພີ່ມເຕີມ, ໂດຍສະເພາະແມ່ນຖາມກ່ຽວກັບຜົນກະທົບຂອງວິກິດເງິນເຟີ້.[1] ບໍລິສັດ ຄົ້ນຄວ້າອິນໂດຈີນ ປະຈໍາລາວ ເປັນຜູ້ເກັບກໍາຂໍ້ມູນພາກສະໜາມ ດ້ວຍວິທີການສໍາພາດທາງໂທລະສັບ. ຜູ້ສໍາພາດໄດ້ຂໍໃຫ້ຜູ້ໃຫ້ສໍາພາດປະເມີນ ແລະ ບອກກ່ຽວກັບສະພາບວິກິດການໃນບ້ານຂອງເຂົາເຈົ້າ, ເຊິ່ງມີບາງຄໍາຖາມກ່ຽວກັບບັນຫາທີ່ກະທົບກັບຕົວຂອງເຂົາເຈົ້າເອງ. ກຸ່ມຕົວຢ່າງທີ່ຖືກສໍາພາດອາດຈະບໍ່ສາມາດເປັນຕົວແທນຂອງປະຊາຊົນທັງໝົດ, ແຕ່ສາມາດຊ່ວຍໃຫ້ເຂົ້າໃຈກ່ຽວກັບຜົນກະທົບຕ່າງໆທີ່ປະຊາຊົນໃນບ້ານຊົນນະບົດປະເຊີນໃນຊ່ວງທີ່ມີວິກິດການ.
ການຄົ້ນພົບຈາກການສໍາຫຼວດຊຸມຊົນນີ້ແມ່ນເສີມໃສ່ກັບຜົນຈາກ ການສໍາຫຼວດຄົວເຮືອນທາງໂທລະສັບທີ່ປະຕິບັດເປັນປະຈໍາ, ເຊິ່ງມັນເປັນການສໍາຫຼວດທີ່ໄດ້ຖືກອອກແບບເພື່ອໃຫ້ ຜົນໄດ້ຮັບສາມາດເປັນ ຕົວແທນລະດັບຊາດ ແລະ ໄດ້ປະຕິບັດທຸກຫົກເດືອນນັບຕັ້ງແຕ່ເກີດການແຜ່ລະບາດຂອງພະຍາດໂຄວິດ.

**ບົດສະຫຼຸບຫຍໍ້ນີ້ສັງລວມຜົນການຄົ້ນພົບຕົ້ນຕໍຈາກການສໍາຫຼວດຊຸມຊົນໂດຍໃຊ້ວິທີການສໍາຫຼວດດ້ານຄຸນນະພາບ. ໂຄງສ້າງຂອງ** ບົດສະຫຼຸບຫຍໍ້ນີ້ປະກອບດ້ວຍສີ່ຂົງເຂດ ທີ່ເປັນຈຸດສຸມຂອງການສໍາຫຼວດ ດັ່ງທີ່ໄດ້ອະທິບາຍຢູ່ຂ້າງເທິງ. ຕໍ່ຈາກພາກແນະນໍານີ້, ມີພາກທີ 2 ທີ່ປະເມີນຜົນກະທົບຂອງການລະບາດຂອງພະຍາດໂຄວິດ-19 ແລະ ວິກິດເງິນເຟີ້ຕໍ່ກັບຊີວິດການເປັນຢູ່ຂອງຄົວເຮືອນ ແລະ ຍຸດທະສາດການຮັບມືຂອງເຂົາເຈົ້າ. ຕໍ່ໄປແມ່ນ ພາກທີ 3 ທີ່ເນັ້ນໃສ່ຄວາມຮັບຮູ້ ແລະ ປະສົບການທີ່ກ່ຽວຂ້ອງກັບການໃຫ້ບໍລິການຂອງລັດ ລວມທັງການສຶກສາ, ການຮັກສາສຸຂະພາບ, ການຊ່ວຍເຫຼືອແລະການສື່ສານ. ສ່ວນ ພາກທີ 4 ແມ່ນເບິ່ງລະດັບຄວາມພໍໃຈ ແລະ ຄວາມຄາດຫວັງຂອງຜູ້ໃຫ້ສໍາພາດກ່ຽວກັບການໃຫ້ບໍລິການຂອງລັດ ແລະ ຂອບເຂດທີ່ເຂົາເຈົ້າມີສ່ວນຮ່ວມໃນກິດຈະກໍາພັດທະນາບ້ານ. ສຸດທ້າຍພາກທີ 5 ທີ່ພະຍາຍາມສະຫຼຸບສັງລວມບັນຫາທີ່ຄົ້ນພົບທັງໝົດ ແລະ ໃຫ້ຄໍາແນະນໍາທີ່ຈໍາເປັນເພື່ອແກ້ໄຂບັນຫາເຫຼົ່ານັ້ນ.

# 2. ຊີວິດການເປັນຢູ່ຂອງຄົວເຮືອນ

## 2.1 ຊີວິດການເປັນຢູ່ຂອງຄົວເຮືອນກ່ອນມີພະຍາດລະບາດ

**ກ່ອນມີການລະບາດຂອງພະຍາດໂຄວິດ-19, ປະຊາຊົນໃນເຂດທີ່ເຮັດການສໍາຫຼວດແມ່ນເຮັດອາຊີບປູກຝັງ ແລະ ລ້ຽງສັດເປັນຕົ້ນຕໍ, ຄຽງຄູ່ກັບການຂຸດຄົ້ນປ່າໄມ້ ແລະ ຊັບພະຍາກອນທໍາມະຊາດອື່ນໆ.** ການເຮັດກະສິກໍາຕົ້ນຕໍແມ່ນການປູກເຂົ້າຢູ່ເຂດພູພຽງ ແລະ ທົ່ງພຽງ ( ນາ ແລະ ໄຮ່ ) ເພື່ອລ້ຽງຊີບ, ແລະມີການປູກພືດສໍາຮອງ ໂດຍສະເພາະແມ່ນສາລີ, ທີ່ຜະລິດເພື່ອສ້າງລາຍຮັບເສີມ. ບາງບ້ານ ໃນເຂດທີ່ສາມາດເຂົ້າເຖິງລະບົບ ຊົນລະປະທານ ສາມາດຜະລິດເຂົ້າໄດ້ປີລະສອງເທື່ອ (ສອງລະດູ). ຜູ້ໃຫ້ສໍາພາດຫຼາຍຄົນບອກວ່າ ນອກຈາກປູກ ເຂົ້ານາປີ, ປູກເຂົ້າໄຮ່, ປູກມັນຕົ້ນ, ຮ່ອນຄໍາ, ລ້ຽງສັດ, ສະມາຊິກຊຸມຊົນຂອງເຂົາເຈົ້າຍັງໄດ້ຂຸດຄົ້ນຜະລິດຕະພັນ ຈາກປ່າທີ່ບໍ່ແມ່ນໄມ້ (ເຄື່ອງປ່າຂອງດົງ) ທັງເພື່ອຂາຍ ຫຼື ນໍາໃຊ້ເອງ. ຜູ້ໃຫ້ສໍາພາດທີ່ລ້ຽງສັດ, ໂດຍສະເພາະແມ່ນສັດໃຫຍ່ເຊັ່ນງົວ, ແບ້, ແລະ ໝູ, ເຂົາເຈົ້າມັກຈະຖືວ່າສັດເຫຼົ່ານີ້ເປັນຄັງສົມບັດແລະເປັນວິທີການທ້ອນເງິນ, ເມື່ອເຖິງເວລາທີ່ຈໍາ

[1] ບ້ານເຫຼົ່ານີ້ ແມ່ນຕັ້ງຢູ່ໃນແຂວງຫຼວງພະບາງ, ຫຼວງນໍ້າທາ, ສະຫວັນນະເຂດ, ສາລະວັນ , ເຊກອງ ແລະ ອັດຕະປື. ແລະ ເປັນບ້ານທີ່ຖືວ່າທຸກຍາກ ແລະ ເປັນບ້ານເປົ້າໝາຍຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ.

ເປັນຊັບສິນເຫຼົ່ານີ້ຈະຖືກຂາຍ, ໂດຍສະເພາະ ເພື່ອເອົາໄປໃຊ້ຈ່າຍສໍາລັບການສຶກສາ ແລະ ການຮັກສາສຸຂະພາບ. ສັດໃຫຍ່ຖືວ່າເປັນ ຄັງສິນບັດທີ່ເຊື່ອໝັ້ນໄດ້ຫຼາຍທີ່ສຸດສໍາລັບການໃຊ້ຈ່າຍໃນດ້ານດັ່ງກ່າວ.

**ຜູ້ໃຫ້ສໍາພາດຈໍານວນໜຶ່ງ ເຊິ່ງເປັນອັດຕາສ່ວນທີ່ບໍ່ຫຼາຍປານໃດໃນຈໍານວນຜູ້ໃຫ້ສໍາພາດທັງໝົດແມ່ນເຮັດວຽກທີ່ໄດ້ຮັບຄ່າຈ້າງລາຍວັນແລະມີສ່ວນຮ່ວມໃນທຸລະກິດຄອບຄົວທີ່ບໍ່ແມ່ນການເຮັດກະສິກໍາ, ເຊິ່ງເປັນວຽກເສີມ ແລະ / ຫຼື ວຽກຕາມລະດູການເປັນຢ່າງໜ້ອຍ.** 1 ສ່ວນ 5 ຂອງສະມາຊິກຊຸມຊົນໃນແຂວງພາກໃຕ້, ຍົກເວັ້ນ ແຂວງສະຫວັນນະເຂດ, ລາຍງານວ່າໄດ້ຮັບຄ່າຈ້າງຈາກການເຮັດວຽກເຊັ່ນ: ການປູກຫຍ້າ ແລະ ວຽກງານອື່ນໆກ່ຽວກັບການປູກຝັງເຊັ່ນ: ກາເຟ, ໝາກແໜ່ງ, ອ້ອຍ, ມັນຕົ້ນ ແລະ ກ້ວຍ. ຄວາມຕ້ອງການແຮງງານເພື່ອເຮັດວຽກເຫຼົ່ານີ້ສ່ວນຫຼາຍແມ່ນຂຶ້ນຕາມລະດູການ, ໂດຍປົກກະຕິແລ້ວເປັນການຈ້າງງານໃນຊ່ວງຫຼັງລະດູການປູກຝັງ ແລະ ເກັບກ່ຽວ. ຜູ້ໃຫ້ສໍາພາດບາງຄົນກ່າວວ່າໃນໄລຍະກ່ອນການແຜ່ລະບາດຂອງພະຍາດໂຄວິດ ພວກເຂົາ ແລະ ສະມາຊິກຊຸມຊົນຄົນອື່ນໆ ໄດ້ໄປຊອກຫາວຽກເຮັດງານທໍາຢູ່ໃນປະເທດໄທທີ່ເປັນປະເທດເພື່ອນບ້ານ, ໃນຂະນະດຽວກັນກໍ່ມີຄົນອື່ນທີ່ໄດ້ເຮັດວຽກເປັນລັດຖະກອນ. ໃນໄລຍະນີ້, ສະມາຊິກຊຸມຊົນຈໍານວນໜຶ່ງໄດ້ຄ້າຂາຍຍ່ອຍຂະໜາດນ້ອຍ ຢູ່ໃນບ້ານ, ໂດຍທົ່ວໄປແລ້ວແມ່ນການຂາຍອາຫານ ແລະ ເຄື່ອງດື່ມ. ຜູ້ໃຫ້ສໍາພາດຫຼາຍຄົນກ່າວວ່າຄວາມຕ້ອງການຊື້ອາຫານ ແລະ ເຄື່ອງດື່ມຫຼຸດລົງ ເນື່ອງຈາກມີການແຜ່ລະບາດຂອງພະຍາດໂຄວິດ, ຈຶ່ງເຮັດໃຫ້ຜູ້ຂາຍເຄື່ອງເຫຼົ່ານີ້ຕ້ອງໄດ້ຢຸດເຊົາກິດຈະການ, ມີ ພຽງແຕ່ຈໍານວນຫນ້ອຍທີ່ສາມາດສືບຕໍ່.

**ສະພາບຊີວິດການເປັນຢູ່ຂອງປະຊາຊົນໃນເຂດນະບົດໃນ 6 ແຂວງທີ່ເຮັດການສໍາຫຼວດ ມີຄວາມແຕກຕ່າງກັນຫຼາຍຢ່າງດັ່ງນີ້:**

- **ຫຼວງນໍ້າທາ** : ຕັ້ງຢູ່ທາງພາກເໜືອຂອງປະເທດ ຕິດກັບຊາຍແດນປະເທດຈີນ, ປະຊາຊົນສ່ວນໃຫຍ່ ໃນແຂວງນີ້ເຮັດໄຮ່ເຮັດນາ, ອາຊີບທີ່ພົ້ນເດັ່ນແມ່ນເຮັດເຂົ້ານາ, ເຮັດໄຮ່ ແລະ ປູກພືດຕາມລະດູການເຊັ່ນ: ໝາກແໜ່ງ, ຂ່າ, ຖົ່ວອິນຄາ (ຖົ່ວດາວ) ແລະ ສາລີ. ປະຊາຊົນໃນເຂດນີ້ຕົ້ນຕໍແມ່ນປູກເຂົ້າເພື່ອບໍລິໂພກ ໃນຄົວເຮືອນ ແລະ ເປັນການຄໍ້າປະກັນສະບຽງອາຫານຂອງຕົນ, ໃນຂະນະດຽວກັນພວກເຂົາເຈົ້າກໍເຮັດການປູກພືດຕາມລະດູການ ແລະ ການຂຸດຄົ້ນເຄື່ອງປ່າຂອງດົງເພື່ອການຄ້າ.

- **ຫຼວງພະບາງ** : ຕັ້ງຢູ່ທາງພາກເໜືອຂອງປະເທດ, ເນື້ອທີ່ສ່ວນໃຫຍ່ຂອງແຂວງນີ້ເປັນເຂດພູດອຍ. ປະຊາ ຊົນທີ່ຢູ່ໃນເຂດທີ່ເຮັດການສໍາຫຼວດສ່ວນຫຼາຍປູກເຂົ້າໄຮ່, ໃນນັ້ນມີບາງສ່ວນແມ່ນເຮັດນາປູກເຂົ້າຕາມ ຮ່ອມພູ ແລະ ເປີ້ນພູ. ການປູກເຂົ້າທັງສອງແບບ ລ້ວນແຕ່ແມ່ນຜະລິດເພື່ອລ້ຽງຊີບເປັນຕົ້ນຕໍ. ເພື່ອສ້າງ ລາຍຮັບເສີມ, ສະມາຊິກຊຸມຊົນ ໄດ້ປູກພືດຊະນິດອື່ນໆ, ເປັນຕົ້ນແມ່ນສາລີ. ພວກເຂົາເຈົ້າຍັງໄດ້ລ້ຽງສັດໃຫຍ່ໄວ້ເປັນແຫຼ່ງລາຍຮັບຕົ້ນຕໍ, ເຊິ່ງສ່ວນຫຼາຍຖືກປ່ອຍໃຫ້ຍ່າງເຫຼາະຫາກິນເອງ. ເຖິງແມ່ນວ່າ ລາຄາຫືວ ຫນ່ວຍຂອງສະບຽງອາຫານຈະເພີ່ມຂຶ້ນໃນໄລຍະທີ່ດໍາເນີນການສໍາຫລວດ, ການຜະລິດສະບຽງອາຫານພັດຫຼຸດລົງ; ໂດຍລວມແລ້ວສິ່ງພົນໃຫ້ລາຍໄດ້ຈາກການເຮັດກະສິກໍາ ແລະ ລະດັບການບໍລິໂພກອາຫານ ຫຼຸດລົງ. ການປະກອບອາຊີບເພື່ອດໍາລົງຊີວິດຢູ່ເຂດນີ້ມີຄວາມຫຼາກຫຼາຍ ຫຼາຍສົມຄວນ, ນອກຈາກຊາວກະສິກອນແລ້ວ, ຍັງມີຄົນງານເຄື່ອນຍ້າຍ, ຊາວຄ້າຂາຍ ແລະ ພະນັກງານລັດຖະກອນ.

- **ສະຫວັນນະເຂດ** : ຕັ້ງຢູ່ທາງພາກກາງຂອງປະເທດ, ເມື່ອທຽບໃສ່ກັບສອງແຂວງທີ່ໄດ້ກ່າວມາກ່ອນໜ້ານີ້, ເນື້ອທີ່ຂອງແຂວງນີ້ປະກອບດ້ວຍ ທົ່ງພຽງໃນອັດຕາສ່ວນຂ້ອນຂ້າງສູງ. ການປະກອບອາຊີບເພື່ອດໍາລົງຊີວິດ ຂອງປະຊາຊົນໃນບ້ານຊົນນະບົດຂອງແຂວງນີ້ແມ່ນການລ້ຽງສັດ ແລະ ການປູກເຂົ້ານາປີ. ຂະນະທີ່ໄກ່ແລະສັດນ້ອຍອື່ນໆຖືກລ້ຽງເພື່ອບໍລິໂພກໃນຄອບຄົວແລະເຮັດພິທີການຕ່າງໆ, ສັດໃຫຍ່ເຊັ່ນຄວາຍແລະງົວກໍຖືກລ້ຽງເປັນຄັງສິນບັດ ເພື່ອເອົາໄວ້ຂາຍໃນເວລາທີ່ຄອບຄົວຈໍາເປັນຕ້ອງໃຊ້ເງິນ, ຕົ້ນຕໍແມ່ນໃຊ້ຈ່າຍໃນດ້ານສຸຂະພາບແລະການສຶກສາ. ຜູ້ໃຫ້ສໍາພາດບາງຄົນໄດ້ລາຍງານວ່າ ສະມາຊິກໃນຊຸມຊົນຂອງເຂົາເຈົ້າ ໄດ້ທົດລອງເຮັດສວນມັນຕົ້ນຂະໜາດນ້ອຍ, ໂດຍມີຈຸດປະສົງທີ່ຈະ

ຂະຫຍາຍການຜະລິດເພື່ອການຄ້າ. ໃນບາງບ້ານ, ຄົວເຮືອນປູກຜັກເພື່ອບໍລິໂພກເອງ. ສະມາຊິກຊຸມຊົນບາງຄົນເຮັດທຸລະກິດຄອບຄົວຂະໜາດນ້ອຍເປັນຕົ້ນແມ່ນ ການຄ້າຂາຍແລະໃຫ້ການບໍລິການຂະໜາດນ້ອຍ. ຍັງມີປະຊາຊົນອີກຈໍານວນໜຶ່ງທີ່ໃຊ້ແຮງງານແລກເງິນ, ເຊິ່ງສ່ວນໃຫຍ່ເປັນວຽກງານຕາມລະດູການ, ທີ່ມີແຕ່ວຽກເຮັດສວນກາເຟໃນຊ່ວງເວລາ ປູກ ແລະ ເກັບກ່ຽວ. ໃນບາງບ້ານ, ເຜົາຖ່ານຂາຍ.

- **ເຊກອງ** : ຕັ້ງຢູ່ທາງພາກໃຕ້ຂອງປະເທດ, ຜູ້ໃຫ້ສໍາພາດສ່ວນໃຫຍ່ ໃນແຂວງນີ້ ລະບຸວ່າ ສະມາຊິກໃນຊຸມຊົນຂອງເຂົາເຈົ້າ ເຮັດນາປູກເຂົ້າ, ມີສ່ວນໜ້ອຍທີ່ເຮັດໄຮ່ປູກເຂົ້າໃນເຂດພູດອຍ. ນອກຈາກນັ້ນ, ສະມາຊິກຊຸມຊົນຈໍານວນໜຶ່ງ ໄດ້ປະກອບອາຊີບປູກພືດເປັນສິນຄ້າ, ຕົ້ນຕໍແມ່ນມັນຕົ້ນ ແລະ ກາເຟ. ນອກຈາກການປູກເຂົ້າແລ້ວ, ການປະກອບອາຊີບເພື່ອດໍາລົງຊີວິດ ຕົ້ນຕໍແມ່ນການລ້ຽງສັດ (ງົວ, ແບ້, ໝູ). ນອກນັ້ນ, ຍັງມີການລາຍງານວ່າມີປະຊາຊົນຈໍານວນໜຶ່ງເຮັດການຂຸດຄົ້ນຄໍາແບບດັ້ງເດີມ (ຮ່ອນຄໍາ) ຢູ່ໃນແຂວງນີ້ ແລະ ເກັບເຄື່ອງປ່າຂອງດົງເພື່ອເອົາໄປຂາຍ ແລະ ບໍລິໂພກໃນຄົວເຮືອນ, ເຊິ່ງປົກກະຕິ ແລ້ວແມ່ນຖືວ່າອາຊີບເສີມ.
- **ສາລະວັນ** : ມີຜູ້ໃຫ້ສໍາພາດຫຼາຍຄົນທີ່ອາໄສຢູ່ໃນບ້ານທີ່ເຂົ້າເຖິງລະບົບຊົນລະປະທານ, ພວກເຂົາລາຍງານວ່າສະມາຊິກໃນຊຸມຊົນສ່ວນຫຼາຍສາມາດປູກເຂົ້າໄດ້ ສອງລະດູ. ພວກເຂົາເຈົ້າຍັງໄດ້ລ້ຽງສັດເຊັ່ນ: ແບ້, ຫມູ ແລະ ສັດປີກເພື່ອການຄ້າ. ສະມາຊິກຊຸມຊົນບາງກຸ່ມປະກອບອາຊີບກໍາມະກອນ, ໂດຍທົ່ວໄປແລ້ວແມ່ນເຮັດວຽກຖາງຫຍ້າ ແລະ ວຽກຕ່າງໆໃນສວນມັນຕົ້ນ ແລະ ສວນກ້ວຍ ທີ່ຕ້ອງໃຊ້ແຮງງານ. ຢູ່ແຂວງນີ້, ພືດຜັກທີ່ປູກໃນສວນຄົວສ່ວນຫຼາຍ ແມ່ນໄວ້ຂາຍ, ມີພຽງແຕ່ສ່ວນຫນ້ອຍທີ່ໃຊ້ບໍລິໂພກ ໃນຄົວເຮືອນ. ຢູ່ ເມືອງ ທ່າປາງທອງ, ແຂວງ ສະຫວັນນະເຂດ ແລະ ເຂດອື່ນໆ ໃນແຂວງພາກໃຕ້, ຜູ້ໃຫ້ສໍາພາດບາງກຸ່ມໄດ້ລາຍງານວ່າມີສະມາຊິກຊຸມຊົນເຮັດອາຊີບເຜົາຖ່ານຂາຍ.
- **ອັດຕະປື** : ຕັ້ງຢູ່ທາງພາກໃຕ້ຂອງປະເທດ ຕິດກັບຊາຍແດນກໍາປູເຈຍ ແລະ ຫວຽດນາມ, ຜູ້ໃຫ້ສໍາພາດສ່ວນໃຫຍ່ໃນແຂວງນີ້ອາໄສຢູ່ໃນຊຸມຊົນທີ່ປູກເຂົ້ານາ ແລະ ເຂົ້າໄຮ່. ປະມານ 20 ສ່ວນຮ້ອຍຂອງສະມາຊິກຊຸມຊົນທີ່ປະກອບອາຊີບກໍາມະກອນຢູ່ນອກບ້ານຂອງເຂົາເຈົ້າ, ໂດຍທົ່ວໄປແມ່ນເຮັດຖາງຫຍ້າ ແລະ ວຽກປູກຝັງຕ່າງໆໃນສວນ ກາເຟ, ໝາກແໜ່ງ, ອ້ອຍ, ມັນຕົ້ນ ແລະ ສວນກ້ວຍໃນເຂດຕົວເມືອງ, ເຂດກໍາລັງພັດທະນາເປັນຕົວເມືອງຂອງແຂວງ ແລະ ເມືອງໃຫຍ່ໆໃນແຂວງ. ຄືກັບແຂວງອື່ນໆ, ວຽກງານເຫຼົ່ານີ້ມັກຈະເປັນວຽກຕາມລະດູການ, ເຊິ່ງຈະມີວຽກເຮັດຢູ່ໃນໄລຍະປູກຝັງ ແລະ ເກັບກ່ຽວ. ສ່ວນອີກ 80 ສ່ວນຮ້ອຍຂອງສະມາຊິກຊຸມຊົນທີ່ເຮັດອາຊີບແຮງງານສ່ວນຫຼາຍ ແມ່ນເປັນກໍາມະກອນທີ່ເຮັດວຽກແຮງງານໃນສວນກະສິກໍາຢູ່ໃນບ້ານຂອງຕົນເອງ.

## 2.2 ຜົນກະທົບຂອງພະຍາດລະບາດແລະອັດຕາເງິນເຟີ້

**ຜູ້ໃຫ້ສໍາພາດສ່ວນໃຫຍ່ໄດ້ລາຍງານວ່າວິກິດການແຜ່ລະບາດຂອງພະຍາດໂຄວິດ, ລາຄານໍ້າມັນເຊື້ອໄຟ ແລະ ອັດຕາເງິນເຟີ້ທີ່ເພີ່ມຂຶ້ນ, ມີຜົນກະທົບຢ່າງຮ້າຍແຮງຕໍ່ການດໍາລົງຊີວິດຂອງພວກເຂົາ.** ພວກເຂົາເຈົ້າ ໄດ້ກ່າວເປັນພິເສດວ່າ ວິກິດການເຫຼົ່ານີ້ສົ່ງຜົນກະທົບຕໍ່ຊີວິດ ແລະ ການເປັນຢູ່ຂອງເຂົາເຈົ້າ ແລະ ສະມາຊິກຊຸມຊົນ, ເນື່ອງຈາກວ່າມັນຈໍາກັດການສະໜອງພາຍໃນ, ເຮັດໃຫ້ສູນເສຍວຽກເຮັດງານທໍາ, ລາຄາຂາຍໜ້າສວນ ແລະ ລາຍຮັບຂອງຄົວເຮືອນຫຼຸດລົງ ແລະ ໂອກາດໄດ້ຮັບການຈ້າງງານຫຼຸດລົງ.

**ໃນໄລຍະທີ່ມີການແຜ່ລະບາດຂອງພະຍາດໂຄວິດ, ລາຄາຂາຍໜ້າສວນໄດ້ຫຼຸດລົງ, ເຊິ່ງເຮັດໃຫ້ລາຍໄດ້ ຂອງຄົວເຮືອນຫຼຸດລົງ.** ຕົວຢ່າງ, ຢູ່ແຂວງຫຼວງນໍ້າທາ, ມີລາຍງານວ່າ: ລາຄາໜ້າສວນສໍາລັບສາລີໄດ້ຫຼຸດລົງ: ຈາກ 3-4 ລ້ານກີບຕໍ່ໂຕນໃນໄລຍະກ່ອນ

ມີການແຜ່ລະບາດຂອງພະຍາດໂຄວິດ ມາເປັນ 1 ລ້ານກີບຕໍ່ໂຕນ. ເຊັ່ນດຽວກັນ, ລາຄາໝາກແໜ່ງ ຫຼຸດລົງຈາກ 40,000-47,000 ກີບ/ກິໂລ ມາເປັນ 27,000-30,000 ກີບ/ກິໂລ, ສ່ວນພືດຊະນິດອື່ນໆ ກໍມີລາຄາຫຼຸດລົງ ໃນຫຼາຍ ຫຼື ໜ້ອຍຕ່າງກັນໄປ. ລາຄາຂອງຜະລິດຕະພັນກະສິກຳທີ່ຫຼຸດລົງໄດ້ເຮັດໃຫ້ຊາວກະສິກອນບໍ່ສາມາດຄ້າຂາຍຜະລິດຕະພັນກະສິກຳໄດ້. ຜູ້ໃຫ້ສຳພາດແຂວງສາລະວັນ ເວົ້າວ່າ:

*"ໃນໄລຍະທີ່ມີການແຜ່ລະບາດຂອງພະຍາດໂຄວິດ, ພວກເຮົາບໍ່ຢ້ານປານໃດ. ພວກເຮົາສືບຕໍ່ໃຊ້ຊີວິດຕາມປົກກະຕິ, ເຮັດວຽກຢູ່ສວນ. ຄົນທາງຖຽງນາມຈຳນວນນຶ່ງ ທີ່ເກັບຊື້ມັນຕົ້ນ ໄດ້ລັກເຂົ້າມາຊື້ມັນຕົ້ນ ໃນບ້ານ ແຕ່ກໍໃຫ້ລາຄາຕໍ່າ ສຳລັບມັນຕົ້ນທີ່ຍັງບໍ່ໄດ້ຕາກແຫ້ງ ຈາກລາຄາ 800 ກີບ ລົງມາເປັນ 500 ກີບຕໍ່ກິໂລ. ພວກເຮົາບໍ່ມີທາງເລືອກ, ເພາະວ່າພວກເຮົາບໍ່ສາມາດເກັບມັນໄວ້ໄດ້ດົນ."*

ຢູ່ແຂວງຫຼວງພະບາງ, ຜູ້ໃຫ້ສຳພາດຫຼາຍຄົນລະບຸວ່າເຂົາເຈົ້າ ແລະ ສະມາຊິກຊຸມຊົນຄົນອື່ນໆ ສູນເສຍລາຍຮັບ ແລະ ຂາດແຄນເງິນສົດ ຍ້ອນມາດຕະການຮັກສາໄລຍະຫ່າງທາງສັງຄົມ, ໝາຍຄວາມວ່າເຂົາເຈົ້າ ບໍ່ສາມາດ ປະກອບອາຊີບຕາມປົກກະຕິໄດ້. ມາດຕະການຈຳກັດການເດີນທາງຍັງສົ່ງຜົນກະທົບຢ່າງໜັກໜ່ວງຕໍ່ກັບປະຊາຊົນທີ່ ໄດ້ຮັບເງິນອຸດໜູນ, ເງິນບຳນານ ແລະ ເງິນຊ່ວຍເຫຼືອຕ່າງໆທີ່ຈ່າຍໃຫ້ໃນຮູບແບບທີ່ຄ້າຍຄືກັນ, ໂດຍສະເພາະແມ່ນສົ່ງຜົນກະທົບຕໍ່ນັກຮົບເກົ່າ, ພະນັກງານບຳນານ ແລະ ຄົນພິການ, ທີ່ຈະຕ້ອງເດີນທາງໄປໃນເມືອງເພື່ອຮັບເງິນເຫຼົ່ານີ້.

**ການບໍລິການຂົນສົ່ງໄດ້ຮັບຜົນກະທົບຢ່າງໜັກໜ່ວງ, ທັງຈາກມາດຕະການສະກັດກັ້ນພະຍາດໂຄວິດ-19 ແລະ ລາຄານໍ້າມັນທີ່ເພີ່ມຂຶ້ນໃນເວລາຕໍ່ມາ.** ມາດຕະການສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດໄດ້ຈຳກັດການສະໜອງ ແລະ ການຂົນສົ່ງສິນຄ້າເຂົ້າ-ອອກບ້ານຢ່າງໜັກໜ່ວງ, ຊຶ່ງໝາຍຄວາມວ່າຮ້ານຄ້າຂະໜາດນ້ອຍ ແລະ ທຸລະກິດຂາຍຍ່ອຍຫຼາຍແຫ່ງໃນບ້ານຈຳເປັນຕ້ອງໄດ້ປິດຕົວລົງ. ຊາວບ້ານທີ່ໄດ້ເຄື່ອນຍ້າຍໄປ ຊອກວຽກເຮັດຢູ່ສວນກ້ວຍ ແລະ ສວນອື່ນໆ ຢູ່ເມືອງ ຫຼື ແຂວງອື່ນໆ ບໍ່ໄດ້ຮັບອະນຸຍາດໃຫ້ກັບຄືນບ້ານ. ຢູ່ ແຂວງຫຼວງພະບາງ ບ່ອນທີ່ມີສະມາຊິກຊຸມຊົນເປັນຄົນຊົນເຜົ່າ ທີ່ຜະລິດ ເຄື່ອງຫັດຖະກຳແບບດັ້ງເດີມເພື່ອຂາຍ ແລະ ສ້າງລາຍຮັບ, ພວກເຂົາເຈົ້າບໍ່ສາມາດຂາຍເຄື່ອງຫັດຖະກຳເຫຼົ່ານີ້ໄດ້ ເພາະມາດຕະການປິດເມືອງ ເຮັດໃຫ້ພໍ່ຄ້າແມ່ຄ້າ ບໍ່ສາມາດເຂົ້າມາຊື້ເຄື່ອງຫັດຖະກຳໃນບ້ານຂອງເຂົາເຈົ້າ.

**ໃນຂະນະທີ່ລາຄານໍ້າມັນແລະອັດຕາເງິນເຟີ້ເພີ່ມຂຶ້ນເຮັດໃຫ້ຕົ້ນທຶນການຜະລິດກະສິກຳເພີ່ມຂຶ້ນ, ລາຄາໜ້າສວນສ່ວນໃຫຍ່ຍັງຄືເກົ່າ ຫຼືຕໍ່າກວ່າເກົ່າໃນຕອນກ່ອນມີການແຜ່ລະບາດຂອງພະຍາດໂຄວິດ.** ໃນໄລຍະທີ່ມີການ ແຜ່ລະບາດຂອງພະຍາດໂຄວິດ, ຜູ້ໃຫ້ບໍລິການລົດໄຖນາບໍ່ສາມາດໃຫ້ບໍລິການໃນລາຄາທີ່ປະຊາຊົນຍອມຮັບໄດ້ ເນື່ອງຈາກວ່າລາຄານໍ້າມັນເພີ່ມຂຶ້ນ. ຢູ່ແຂວງສະຫວັນນະເຂດ: ປຸ໋ຍຂາດເຂີນ ແລະ ມີລາຄາແພງຫຼາຍ, ການນຳໃຊ້ປຸ໋ຍຫຼຸດລົງ. ຊາວນາ ໃນເຂດທົ່ງພຽງ ເວົ້າວ່າ:

*" ຍ້ອນວ່າລາຄາປຸ໋ຍແພງຂຶ້ນ, ຊາວກະສິກອນສ່ວນໃຫຍ່ໄດ້ຫຼຸດປະລິມານການໃຊ້ປຸ໋ຍເຄມີລົງ ແລະ ຫັນໄປໃຊ້ປຸ໋ຍຄອກແທນ."*

**ມີລາຍງານວ່າ ລາຍຮັບຂອງຄົວເຮືອນຈາກການຂາຍສັດລ້ຽງ ແລະ ເຄື່ອງປ່າຂອງດົງຫຼຸດລົງ ປະມານ ເຄິ່ງຫນຶ່ງໃນໄລຍະທີ່ມີການແຜ່ລະບາດຂອງພະຍາດໂຄວິດ.** ໃນເດືອນທີ່ຜ່ານມາ, ຄ່າໃຊ້ຈ່າຍສໍາລັບການບໍລິການລົດໄຖນາໃນສວນອ້ອຍ ແລະ ມັນຕົ້ນໄດ້ເພີ່ມຂຶ້ນ ເນື່ອງຈາກວ່າລາຄານໍ້າມັນເພີ່ມຂຶ້ນ ເຊິ່ງ ຕິດພັນກັບການເພີ່ມ ຂຶ້ນຂອງລາຄານໍ້າມັນທົ່ວໂລກ ແລະ ການອ່ອນຄ່າຂອງສະກຸນເງິນກີບ, ເຖິງປານນັ້ນຄ່າບໍລິການຕໍ່ວັນບໍ່ປ່ຽນແປງ. ນັບ ຕັ້ງແຕ່ການແຜ່ລະບາດຂອງພະຍາດໂຄວິດ ເປັນຕົ້ນມາ, ເຖິງແມ່ນວ່າລາຄາໜ້າສວນເປັນເງິນກີບ ໄດ້ເພີ່ມຂຶ້ນຈາກລະດັບກ່ອນການແຜ່ລະບາດຂອງພະຍາດໂຄວິດ, ເຂົາເຈົ້າກໍຍັງບໍ່ສາມາດສູ້ກັບຕົ້ນທຶນການຜະລິດທີ່ເພີ່ມຂຶ້ນໄດ້. ໃນປັດຈຸບັນ ຊາວກະສິກອນທີ່ມີເນື້ອທີ່ 2-3 ເຮັກຕາ ເລືອກທີ່ຈະບໍ່ປູກຝັງຈົນເຕັມເນື້ອທີ່ທັງໝົດ, ມີແຕ່ປູກຝັງໃສ່ເນື້ອທີ່ບາງສ່ວນເທົ່ານັ້ນ, ຍ້ອນວ່າຕົ້ນທຶນການຜະລິດກະສິກໍາເພີ່ມຂຶ້ນ. ຊາວນາແຂວງສະຫວັນນະເຂດ ທ່ານຫນຶ່ງ ເວົ້າວ່າ:

> *"ລາຄານໍ້າມັນເພີ່ມຂຶ້ນຫຼາຍກວ່າ 50 ສ່ວນຮ້ອຍທຽບໃສ່ປີກາຍ, ສະນັ້ນ ຄ່າຈ້າງລົດໄຖເພື່ອໄຖດິນສວນໄດ້ເພີ່ມຂຶ້ນຈາກ 1,5 ລ້ານກີບຕໍ່ເຮັກຕາ ເປັນ 2,5 ລ້ານກີບຕໍ່ເຮັກຕາ. ຂ້ອຍໄດ້ຕັດສິນໃຈຫຼຸດເນື້ອທີ່ປູກມັນຕົ້ນລົງຈາກ 2 ເຮັກຕາມາເປັນ 1 ເຮັກຕາໃນປີນີ້ ເພາະວ່າພວກເຮົາຍັງບໍ່ຮູ້ວ່າ ເວລາເກັບກ່ຽວແລ້ວຈະຂາຍໄດ້ລາຄາເທົ່າໃດ."*

**ດ້ວຍເຫດຜົນທີ່ຄ້າຍຄືກັນ, ທ່າອ່ຽງທີ່ຊາວກະສິກອນຫຼຸດເນື້ອທີ່ການປູກຝັງ ກໍຍັງສາມາດພົບເຫັນຢູ່ໃນ ແຂວງຫຼວງ ພະບາງ.** ໃນແຂວງເຊກອງ ການຂຶ້ນລາຄານໍ້າມັນສົ່ງຜົນກະທົບຕໍ່ຄວາມຖີ່ຂອງການເດີນທາງ ເຊິ່ງຜູ້ໃຫ້ສໍາພາດໃນແຂວງນີ້ ງົດການເດີນທາງຖ້າເປັນໄປໄດ້ ແລະ ຖ້າຫຼີກລ່ຽງບໍ່ໄດ້ ກໍເລືອກຍ່າງທາງໄກເອົາ. ສວນມັນຕົ້ນກໍໄດ້ຮັບຜົນກະທົບ. ຊາວກະສິກອນໄດ້ຊອກເຮັດວຽກແຮງງານເພື່ອສ້າງລາຍຮັບ ນັບມື້ນັບຫຼາຍຂຶ້ນ, ເພື່ອຈະນໍາໃຊ້ລາຍຮັບຈາກການອອກແຮງງານໄປລົງທຶນໃສ່ສວນຂອງຕົນ. ຍ້ອນມີທັງບັນຫາລາຍໄດ້ທີ່ຫຼຸດລົງ ແລະລາຍຈ່າຍ ທີ່ເພີ່ມຂຶ້ນ, ປະຊາຊົນມີແນວໂນ້ມທີ່ຈະຫຼຸດຜ່ອນລາຍຈ່າຍໃຫ້ໄດ້ຫຼາຍທີ່ສຸດດ້ວຍການຈ່າຍສໍາລັບສິ່ງທີ່ຈໍາເປັນ ຢ່າງແທ້ໆ.

**ສະຖານະການຄວາມປອດໄພຢູ່ເຂດຊົນນະບົດໄດ້ຫຼຸດລົງໃນໄລຍະທີ່ມີການແຜ່ລະບາດຂອງພະຍາດໂຄວິດ.** ຜູ້ໃຫ້ສໍາພາດຫຼາຍຄົນໄດ້ລາຍງານວ່າ ການລັກຂະໂມຍໄດ້ເພີ່ມຂຶ້ນໃນລະຫວ່າງການແຜ່ລະບາດຂອງພະຍາດໂຄວິດ, ໂດຍ ສະເພາະແມ່ນການລັກລົດຈັກ ແລະ ສັດລ້ຽງ. ໃນໄລຍະທີ່ມີມາດຕະການປິດເມືອງ, ຊາວກະສິກອນຫຼາຍຄົນຕ້ອງໄດ້ຢູ່ສວນຂອງພວກເຂົາທີ່ຕັ້ງຢູ່ຫ່າງໄກຈາກບ້ານ ເປັນໄລຍະເວລາໜຶ່ງ, ເພື່ອຫຼີກເວັ້ນຄວາມຫຍຸ້ງຍາກໃນການເດີນທາງ ຍ້ອນມາດຕະການຈໍາກັດການເດີນທາງ. ການລັກຂະໂມຍ ມັກຈະເກີດຂຶ້ນໃນເວລາທີ່ພວກເຂົາບໍ່ຢູ່ເຮືອນ. ຜູ້ໃຫ້ສໍາພາດຍັງໄດ້ລາຍງານວ່າສະມາຊິກຊຸມຊົນໃຊ້ຢາເສບຕິດແລະດື່ມເຫຼົ້າຫຼາຍຂຶ້ນ, ເຊິ່ງພວກເຂົາຖືວ່າມີຄວາມບໍ່ປອດໄພຫຼາຍຂຶ້ນ. ອໍານາດການປົກຄອງບ້ານລາຍງານວ່າ, ສະຖານະການຄວາມປອດໄພໄດ້ດີຂຶ້ນພາຍຫຼັງທີ່ຍົກເລີກມາດຕະການປິດເມືອງ. ສ່ວນໜຶ່ງ, ອາດເປັນຍ້ອນຍົກເລີກຂໍ້ຈໍາກັດດັ່ງກ່າວ, ເຈົ້າໜ້າທີ່ໄດ້ປະຈໍາການຢູ່ ບັນດາບ້ານ ເພື່ອ ກວດກາ ແລະ ຕິດຕາມການນໍາໃຊ້ຢາເສບຕິດ ແລະ ເຫຼົ້າ.

**ຍຸດທະສາດຮັບມືກັບ ລາຍຮັບທີ່ຫຼຸດລົງ ແລະ ລາຄາສິນຄ້າທີ່ເພີ່ມຂຶ້ນ ເຮັດໃຫ້ປະຊາຊົນໃນເຂດຊົນນະບົດ ມີແນວໂນ້ມທີ່ຈະອາໄສຊັບພະຍາກອນທໍາມະຊາດຈາກປ່າໄມ້, ລວມທັງ ປາ, ກົບ, ສັດປ່າຂະຫນາດນ້ອຍ ແລະ ເຄື່ອງປ່າຂອງດົງ.**[2] ນາຍຈ້າງທ້ອງຖິ່ນທີ່ບໍ່ມີເງິນສົດ ເພື່ອຈ່າຍຄ່າແຮງງານບາງຄັ້ງກໍ່ໃຫ້ຄ່າຈ້າງເປັນວັດຖຸສິ່ງຂອງ ສໍາລັບຜູ້ທີ່ໃຊ້ແຮງງານເພື່ອແລກປ່ຽນກັບເຄື່ອງໃຊ້

---

[2]ເບິ່ງ ຍຸດທະສາດການຮັບມືກັບຢ່າງຄົບຊຸດ ໃນເອກະສານຊ້ອນທ້າຍ 3.

ປະຈຳວັນທີ່ຈຳເປັນ. ຖ້າຄົນຊົນນະບົດປະເຊີນ ກັບພາວະສຸກເສີນທາງດ້ານສຸຂະພາບທີ່ຕ້ອງໃຊ້ເງິນຫຼາຍ, ໂດຍທົ່ວໄປແລ້ວເຂົາເຈົ້າຈະພະຍາຍາມກູ້ຢືມເງິນ ຈາກກອງທຶນ ພັດທະນາບ້ານ (VDF), ເຊິ່ງເງິນກູ້ຈາກກອງທຶນນີ້ມີອັດຕາດອກເບ້ຍ 2 ສ່ວນຮ້ອຍ. ເຖິງເຖິງຢ່າງໃດກໍຕາມ, ຖ້າບໍ່ມີເງິນຈາກກອງທຶນນີ້, ເຂົາເຈົ້າກໍ່ຈະຕ້ອງໄດ້ໄປກູ້ຢືມຈາກບ່ອນອື່ນໃນອັດຕາດອກເບ້ຍທີ່ສູງກວ່າຫຼາຍ. ຜູ້ໃຫ້ສຳພາດຈາກ ແຂວງສາລະວັນເວົ້າວ່າ

*"ຫຼາຍຄົນໄດ້ກູ້ຢືມເງິນໃນອັດຕາດອກເບ້ຍສູງຖີ່ຂຶ້ນ, ຊຶ່ງໝາຍຄວາມວ່າເຂົາເຈົ້າຈະມີໜີ້ສິນຢ່າງຫຼີກບໍ່ໄດ້. ກ່ອນທີ່ການແຜ່ລະບາດຂອງພະຍາດໂຄວິດ, ອັດຕາດອກເບ້ຍຕໍ່າກວ່ານີ້ ແລະ ຄົນກໍກູ້ຢືມບໍ່ຖີ່ປານໃດ."*

**ແຮງງານເຄື່ອນຍ້າຍທັງພາຍໃນ ແລະ ຕ່າງປະເທດໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ, ໃນລະດັບທີ່ແຕກຕ່າງກັນໄປ.** ຈຳນວນຊາວບ້ານຢູ່ແຂວງສະຫວັນນະເຂດ ທີ່ໄປຊອກວຽກເຮັດງານທຳຢູ່ຕ່າງປະເທດ ມີຫຼາຍກວ່າ ແຂວງອື່ນໆ. ຂະນະທີ່ແຮງງານເຄື່ອນຍ້າຍຈຳນວນນີ້ສ່ວນຫຼາຍໄດ້ກັບຄືນມາຈາກປະເທດໄທພາຍຫຼັງທີ່ເກີດການລະບາດຂອງພະຍາດໂຄວິດ, ແຕ່ໃນໄລຍະທີ່ເຮັດການສຳຫຼວດ, ເກືອບໝົດທຸກຄົນໄດ້ກັບຄືນໄປເຮັດວຽກໃນປະເທດໄທພາຍຫຼັງທີ່ເປີດດ່ານຊາຍແດນ, ຍ້ອນວ່າຄ່າແຮງງານທີ່ສູງກວ່າເປັນປັດໄຈດຶງດູດຫຼາຍ. ຊາວບ້ານ ທີ່ເຄື່ອນຍ້າຍໄປຢູ່ເຂດອ້ອມແອ້ມ ຫລື ເມືອງຕ່າງໆ ໃນລາວ ເພື່ອຊອກວຽກເຮັດງານທຳ ໃນຊ່ວງທີ່ມີການລະບາດຂອງພະຍາດໂຄວິດນັ້ນ ບໍ່ສາມາດ ກັບຄືນບ້ານໄດ້ທຸກວັນ ເໝືອນດັ່ງທີ່ເຂົາເຈົ້າເຄີຍເຮັດເລື້ອຍໆໃນເມື່ອກ່ອນ. ຢູ່ ແຂວງຫລວງພຣະບາງ, ຄົນງານເຫຼົ່ານີ້ ສ່ວນໃຫຍ່ຮັບຈ້າງຢູ່ສວນກ້ວຍຂອງຄົນຕ່າງປະເທດ, ສ່ວນຢູ່ ອັດຕະປື ສ່ວນໃຫຍ່ ເຮັດວຽກຂຸດຄົ້ນບໍ່ຄໍາ.

**ໃນຫຼາຍບ້ານ, ບໍລິມາດການຄ້າຂາຍທີ່ຫຼຸດລົງໄດ້ສົ່ງຜົນກະທົບຕໍ່ການເກັບລາຍຮັບງົບປະມານຂອງລັດ.** ນາຍບ້ານ ຈຳນວນໜຶ່ງລາຍງານເປັນພິເສດວ່າ ການເກັບພາສີອາກອນຂັ້ນບ້ານ ໄດ້ຮັບຜົນກະທົບ ແລະ ເກັບໄດ້ພຽງແຕ່ເຄິ່ງໜຶ່ງ ຂອງແຜນການທີ່ວາງໄວ້, ຍ້ອນວ່າ ຊາວບ້ານຫຼາຍຄົນບໍ່ສາມາດຈ່າຍໄດ້. ອຳນາດການປົກຄອງບ້ານໄດ້ຮັບອະນຸຍາດໃຫ້ແບ່ງເອົາ 30 ສ່ວນຮ້ອຍ ຂອງພາສີທີ່ເກັບໄດ້ ໄວ້ໃຊ້ເຂົ້າໃນກິດຈະກຳຂອງບ້ານ, ການທີ່ເກັບພາສີບໍ່ໄດ້ຕາມແຜນສົ່ງຜົນກະທົບຫຼາຍຕໍ່ການມີທຶນຮອນສໍາລັບວຽກງານຄຸ້ມຄອງການພັດທະນາບ້ານ.

**ຜູ້ໃຫ້ສຳພາດສ່ວນໃຫຍ່ ລະບຸວ່າ ຜົນກະທົບຂອງການແຜ່ລະບາດ ຂອງພະຍາດໂຄວິດຍັງມີຢູ່ ໃນໄລຍະຫຼັງການແຜ່ລະບາດ.** ຕົວຢ່າງ ເຊັ່ນ: ຢູ່ແຂວງເຊກອງ, ຜູ້ໃຫ້ສຳພາດຫຼາຍຄົນບອກວ່າ: ນັບຕັ້ງແຕ່ມີການແຜ່ລະບາດຂອງພະຍາດໂຄວິດ, ວຽກເຮັດງານທຳມີໜ້ອຍລົງ ແລະ ພໍ່ຄ້າຊາວຂາຍທີ່ເຂົ້າມາຊື້ເຄື່ອງປ່າຂອງດົງກໍມີໜ້ອຍລົງເຊັ່ນກັນ, ເຮັດໃຫ້ລາຍຮັບຫຼຸດລົງ ຫຼື ເທົ່າເກົ່າ. ມີລາຍງານວ່າ, ຄົນໜຸ່ມຈຳນວນຫຼາຍໄດ້ອອກຈາກຊຸມຊົນຂອງຕົນໄປຊອກຫາວຽກເຮັດງານທຳ, ມີຈຳນວນຫຼວງຫຼາຍເດີນທາງໄປເຮັດວຽກເປັນກຳມະກອນຢູ່ສວນກາເຟ.

## 3. ການບໍລິການແລະການຊ່ວຍເຫຼືອຂອງລັດ

### 3.1 ການຮັກສາສຸຂະພາບ

**ຜູ້ໃຫ້ສໍາພາດສ່ວນໃຫຍ່ ລາຍງານວ່າ ການຕອບໂຕ້ເບື້ອງຕົ້ນຂອງສະມາຊິກຊຸມຊົນ ຕໍ່ກັບບັນຫາສຸຂະພາບ ແມ່ນການປິ່ນປົວຕົນເອງ ແລະ ສະມາຊິກໃນຄົວເຮືອນດ້ວຍຢາທີ່ຊື້ມາເອງ ແລະ ການປິ່ນປົວຕາມທາງໄສຍະສາດ.** ບັນຫາສຸຂະພາບທີ່ຖືກລາຍງານຫຼາຍທີ່ສຸດ ແມ່ນເປັນຫວັດແລະໄອ. ພົບວ່າຊາວບ້ານໃນເຂດຊົນນະບົດຫຼາຍແຫ່ງ ທັງກິນຢາຫຼວງ ແລະ ປະຕິບັດຕາມທາງສາສະໜາ ຫຼື ທາງໄສຍະສາດ ເພື່ອປິ່ນປົວພະຍາດຂອງເຂົາເຈົ້າ. ຜູ້ໃຫ້ສໍາພາດຈາກ ແຂວງຫຼວງພະບາງລາຍງານວ່າ ສະມາຊິກໃນຊຸມຊົນຂອງເຂົາເຈົ້າ ໂດຍສະເພາະຄົນທຸກຍາກຈະໄປໂຮງໝໍກໍ່ຕໍ່ເມື່ອ ຮ້ານຂາຍຢາບໍ່ມີຢາຫຼວງ ແລະ ຢາພື້ນເມືອງ ຫຼື ການປິ່ນປົວດ້ວຍຢາທີ່ຊື້ຢາກິນເອງ ຫຼື ການປິ່ນປົວທາງໄສຍະສາດບໍ່ໄດ້ຜົນ. ຢູ່ແຂວງອັດຕະປື, ຜູ້ໃຫ້ສໍາພາດໄດ້ລາຍງານວ່າ ສະມາຊິກຊຸມຊົນທີ່ເປັນພະຍາດຕາມລະດູການ ເຊັ່ນ: ຫວັດ, ໄອ, ແລະ ໄຂ້ຍຸງ ມັກຈະໄດ້ຮັບການປິ່ນປົວຢູ່ເຮືອນໂດຍແພດບ້ານ. ມັນເປັນທີ່ຈະແຈ້ງວ່າຄ່າໃຊ້ຈ່າຍໃນການເດີນທາງ ແມ່ນປັດໄຈສໍາຄັນທີ່ເຮັດໃຫ້ປະຊາຊົນມັກທີ່ຈະປິ່ນປົວຢູ່ເຮືອນ. ຕົວຢ່າງ, ສະມາຊິກຊຸມຊົນຄົນໜຶ່ງໃນບ້ານຫ່າງໄກສອກຫຼີກ ທີ່ໄດ້ເດີນທາງໄປໂຮງໝໍເມືອງໃນແຂວງ ສະຫວັນນະເຂດ ເພື່ອຮັບການປິ່ນປົວພະຍາດກ່າວວ່າ:

> *"ທໍາມະດາແລ້ວຈະຕ້ອງໄດ້ເດີນທາງຢ່າງໜ້ອຍ 5 ກິໂລແມັດເພື່ອໄປໂຮງໝໍນ້ອຍ ແລະ ປະມານ 10-30 ກິໂລແມັດ ເພື່ອໄປໂຮງຫມໍເມືອງ. ຄ່າເຊົ່າລົດກະບະໄປໂຮງໝໍເມືອງແມ່ນບໍ່ຕໍ່າກວ່າ 500,000 ກີບ!"*

**ຜູ້ໃຫ້ສໍາພາດກ່າວວ່າ ອາສາສະມັກສາທາລະນະສຸກບ້ານ ໄດ້ໃຫ້ການຊ່ວຍເຫຼືອ ທີ່ເປັນຜົນດີ ຕໍ່ສະມາຊິກ ຂອງ ຊຸມຊົນທ້ອງຖິ່ນ.** ເນື່ອງຈາກວ່າມີບາງບ້ານຕົວຢ່າງຂອງການສໍາຫຼວດບໍ່ສາມາດເຂົ້າເຖິງຮ້ານຂາຍຢາ ຫຼື ໂຮງໝໍ, ສະມາຊິກຊຸມຊົນເກືອບທັງໝົດອາໄສໃຫ້ອາສາສະມັກສາທາລະນະສຸກຂອງບ້ານປິ່ນປົວໃນເວລາທີ່ເຈັບປ່ວຍ. ອາສາສະມັກບ້ານ ຫຼາຍຄົນມີຢາຫຼາກຫຼາຍຊະນິດເພື່ອປິ່ນປົວພະຍາດທົ່ວໄປ, ພ້ອມທັງສະໜອງຂໍ້ມູນກ່ຽວກັບ ບັນຫາ ສຸຂະພາບໃນບ້ານໃຫ້ແກ່ໂຮງໝໍນ້ອຍ ແລະ ໂຮງໝໍເມືອງ. ຜູ້ໃຫ້ສໍາພາດສ່ວນໃຫຍ່ ເວົ້າວ່າອາສາສະໝັກບ້ານເຫຼົ່ານີ້ຊ່ວຍວຽກໄດ້ດີແລະເຂົ້າເຖິງໄດ້. ຜູ້ໃຫ້ສໍາພາດຈາກໝູ່ບ້ານແຫ່ງໜຶ່ງບອກໃຫ້ຮູ້ວ່າ: ສະມາຊິກໃນຊຸມຊົນໃຫ້ຄຸນຄ່າ ແລະ ຕີລາຄາສູງຕໍ່ການຊ່ວຍເຫຼືອຂອງພະນັກງານໂຮງໝໍນ້ອຍທີ່ຕັ້ງຢູ່ໃນບ້ານນັ້ນ.

**ຜູ້ໃຫ້ສໍາພາດລະບຸວ່າ: ຈຸດບໍລິການສຸຂະພາບ, ໂຮງໝໍນ້ອຍ ແລະ ໂຮງໝໍເມືອງ ມີທາງເລືອກໃນການປິ່ນປົວທີ່ຈໍາກັດ ແລະ ເປັນພຽງແຕ່ການບໍລິການຂັ້ນພື້ນຖານ ທີ່ມັກຈະບໍ່ໄດ້ຄຸນນະພາບ.** ເນື່ອງຈາກຄ່າໃຊ້ຈ່າຍໃນການ ເດີນທາງທີ່ສູງຂຶ້ນ, ສະມາຊິກຊຸມຊົນໃນເຂດຊົນນະບົດສ່ວນໃຫຍ່ໃນ ແຂວງສະຫວັນນະເຂດ , ເຊກອງ , ສາລະວັນ ບອກວ່າ ເຂົາເຈົ້າຈະບໍ່ໄປປິ່ນປົວຢູ່ໂຮງໝໍເມືອງ ເວັ້ນເສຍແຕ່ວ່າເຂົາເຈົ້າເຈັບໜັກ ແລະ ຈະໄປປິ່ນປົວຢູ່ ໂຮງໝໍແຂວງ ໃນກໍລະນີທີ່ເປັນພະຍາດຮ້າຍແຮງເທົ່ານັ້ນ. ສະມາຊິກຂອງຊຸມຊົນໃນເຂດຊົນນະບົດຫຼາຍຄົນມັກຈະຍອມຈ່າຍຄ່າເຮັດຮີດແພງໆເພື່ອການປິ່ນປົວພະຍາດທີ່ບໍ່ສໍາເລັດ ຫຼາຍກວ່າການໄປປິ່ນປົວຢູ່ສະຖານທີ່ບໍລິການສາທາລະນະສຸກ.

**ຜູ້ໃຫ້ສໍາພາດລະບຸວ່າ ສະມາຊິກຊຸມຊົນ ສ່ວນໃຫຍ່ ໄດ້ປະຕິບັດຕາມມາດຕະການປ້ອງກັນພະຍາດໂຄວິດ-19 ທີ່ມີຜົນບັງຄັບໃຊ້ ແລະ ໄດ້ຮັບວັກຊີນປ້ອງກັນພະຍາດໂຄວິດ-19 ສອງເຂັມ.** ອາສາສະມັກສາທາລະນະສຸກບ້ານໄດ້ພະຍາຍາມປະຕິບັດຕາມມາດຕະການຂອງລັດຖະບານ ແລະ ຊ່ວຍໃນການສັກຢາວັກຊີນປ້ອງກັນພະຍາດໂຄວິດ. ສະມາຊິກຊຸມຊົນທີ່ມີຖານະ

ຂ້ອນຂ້າງດີມີແນວໂນ້ມທີ່ຈະປະຕິບັດມາດຕະການຮັກສາໄລຍະຫ່າງທາງສັງຄົມແລະມາດຕະການປິດເມືອງ, ໃນຂະນະທີ່ຄົນທຸກຍາກມີແນວໂນ້ມທີ່ຈະ ຫລີກເວັ້ນການເດີນທາງ ແລະ ພັກເຊົາຢູ່ໃນສວນຂອງພວກເຂົາ. ຂໍ້ຮຽກຮ້ອງໃຫ້ໃສ່ຜ້າອັດປາກອັດດັງແມ່ນໄດ້ຮັບການຕອບຮັບໃນສັງຄົມ ຢ່າງກວ້າງຂວາງ, ສະມາຊິກຊຸມຊົນສ່ວນໃຫຍ່ປະຕິບັດຕາມ. ເມື່ອມີກໍລະນີສົງໄສວ່າຕິດເຊື້ອພະຍາດໂຄວິດ-19, ພວກເຂົາກໍຖືກນໍາສົ່ງໄປໂຮງໝໍເມືອງ, ຄົນທີ່ມີຜົນກວດເປັນບວກແມ່ນຖືກກັກຕົວໄວ້. ສະມາຊິກຂອງຊຸມຊົນໃນເຂດຊົນນະບົດແມ່ນເຕັມ ໃຈທີ່ຈະຮັບການກວດ ແລະ ສັກຢາກັນພະຍາດໂຄວິດ ໂດຍໜ່ວຍບໍລິການສຸຂະພາບຂອງລັດ. ແນວໃດກໍ່ຕາມ, ຜູ້ໃຫ້ສຳພາດຈາກແຂວງຫຼວງນ້ຳທາ ລາຍງານວ່າ ໃນຂະນະທີ່ສະມາຊິກຊຸມຊົນສ່ວນໃຫຍ່ໄດ້ຮັບ ວັກຊີນປ້ອງກັນພະຍາດໂຄວິດ-19 ຈຳນວນ 2 ເຂັມ, ແຕ່ຫຼາຍຄົນຍັງບໍ່ໄດ້ສັກຢາວັກຊີນເຂັມທີ 3 ເພາະວ່າມັນຖືກໄລຍະລະດູການເກັບກ່ຽວ, ຊາວກະສິກອນສ່ວນຫຼາຍເຮັດວຽກຢູ່ສວນ ແລະ ບໍ່ໄດ້ພັກເຊົາຢູ່ບ່ອນທີ່ອາໄສປະຈຳ.

### 3.2 ການສຶກສາ

**ຜູ້ໃຫ້ສຳພາດໃນທຸກໆແຂວງ, ໂດຍສະເພາະພວກທີ່ຢູ່ໃນແຂວງພາກໃຕ້, ລາຍງານວ່າ ມີນັກຮຽນຫຼາຍຄົນ ອອກໂຮງຮຽນຫລັງຈາກທີ່ມີການແຜ່ລະບາດ ຂອງໂລກລະບາດ.** ຜູ້ໃຫ້ສຳພາດໃນທຸກໆບ້ານບອກວ່າ ບໍ່ມີກໍລະນີ ນັກຮຽນຄ້າງຫ້ອງໃນໄລຍະປິດເມືອງ. ແນວໃດກໍ່ຕາມ, ຜູ້ໃຫ້ສຳພາດທັງໝົດຍັງໃຫ້ຮູ້ອີກວ່າ: ໃນໄລຍະປິດເມືອງນີ້ ຄຸນນະພາບການຮຽນການສອນມີຄຸນນະພາບຕ່ຳ, ນັກຮຽນໃນບ້ານຊົນນະບົດຍັງບໍ່ມີໂອກາດໄດ້ຮຽນແບບອອນລາຍ ເໝືອນດັ່ງທີ່ນັກຮຽນໃນເມືອງຫຼວງຂອງບາງແຂວງ ແລະ ນັກຮຽນທີ່ເຂົ້າໂຮງຮຽນເອກະຊົນສາມາດເຂົ້າເຖິງ.

**ຂະນະທີ່ນັກຮຽນໄວໜຸ່ມທີ່ອອກໂຮງຮຽນໃນໄລຍະນີ້ຫວັງທີ່ຈະໄປຊອກວຽກເຮັດເພື່ອໃຫ້ໄດ້ຄ່າຈ້າງ, ແຕ່ຄຸນນະພາບ ຂອງວຽກງານທີ່ມີຢູ່ນັ້ນແມ່ນຕໍ່າຫຼາຍ.** ພາຍຫຼັງທີ່ດ່ານຊາຍແດນລາວ-ໄທໄດ້ເປີດຄືນ, ນັກຮຽນມັດທະຍົມຕົ້ນມັກຈະພະຍາຍາມໄປຊອກຫາວຽກເຮັດງານທຳຢູ່ໃນປະເທດໄທ. ແຕ່ວ່າຜູ້ທີ່ມີອາຍຸຕໍ່າກວ່າ 18 ປີ ບໍ່ສາມາດຂໍໃບອະນຸຍາດ ເຮັດວຽກໃນປະເທດໄທໄດ້ຢ່າງຖືກກົດໝາຍ, ສະນັ້ນ ພວກເຂົາຈຶ່ງໄປເຮັດວຽກຢູ່ໄທແບບຜິດກົດໝາຍ ຫຼື ຫາວຽກເຮັດຢູ່ສວນກ້ວຍໃນແຂວງພາກກາງ ແລະ ພາກໃຕ້. ຜູ້ໃຫ້ສຳພາດຄົນໜຶ່ງກ່າວວ່າ, ຊາວໜຸ່ມຫຼາຍຄົນໄປຊອກວຽກເຮັດຢູ່ຈີນ, ແຕ່ມີຫຼາຍຄົນບໍ່ສາມາດເຮັດວຽກໃຫ້ເປັນທີ່ພໍໃຈຂອງນາຍຈ້າງ. ຜູ້ໃຫ້ສຳພາດບາງຄົນບອກວ່າ ຊາວໜຸ່ມເຫຼົ່ານີ້ຫຼາຍຄົນເລີ່ມຕິດຢາເສບຕິດ ຫຼື ມີພຶດຕິກຳທີ່ບໍ່ດີຫຼາຍຢ່າງ ຈົນເຮັດໃຫ້ຖືກສົ່ງກັບຄືນບ້ານເກີດ. ຜູ້ໃຫ້ສຳພາດຈາກ ແຂວງສະຫວັນນະເຂດ ລາຍງານວ່າ ພໍ່ແມ່ແລະສະມາຊິກຄອບຄົວ ຈະໄດ້ເດີນທາງໄປ ສວນກ້ວຍຢູ່ ແຂວງສາລະວັນ ເພື່ອຮຽກຮ້ອງແທນລູກຫຼານທີ່ຕ້ອງໄດ້ເຮັດວຽກໃນສະພາບທີ່ທຸກຍາກລາບາກຫຼາຍລວມທັງກໍລະນີທີ່ບໍ່ໄດ້ຮັບເງິນຄ່າຈ້າງ. ສະພາບການດັ່ງກ່າວສະຫຼຸບໄດ້ຈາກທີ່ນາຍບ້ານໃນແຂວງພາກໃຕ້ບອກໃຫ້ຮູ້ວ່າ:

> *"ໃນໄລຍະທີ່ມີການປິດເມືອງເພື່ອສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19, ໂຮງຮຽນຖືກປິດໝົດແລະເດັກນ້ອຍບໍ່ໄດ້ຮຽນຢ່າງໜ້ອຍເປັນເວລາຫນຶ່ງເດືອນ. ນັກຮຽນມັດທະຍົມຕົ້ນບໍ່ເອົາໃຈໃສ່ຮຽນໜັງສືພາຍຫຼັງທີ່ໂຮງຮຽນເປີດຄືນ. ອຳນາດການປົກຄອງບ້ານ ໄດ້ຈັດປະຊຸມກັບພໍ່ແມ່ປະຊາຊົນ ເພື່ອຊຸກຍູ້ໃຫ້ລູກຫຼານໄດ້ກັບຄືນເຂົ້າໂຮງຮຽນ. ເຖິງປານນັ້ນ, ເດັກນ້ອຍຜູ້ຊາຍບາງຄົນກໍຍັງອອກໂຮງຮຽນໄປເຮັດນາກັບພໍ່ແມ່."*

## 3.3 ການຊ່ວຍເຫຼືອສັງຄົມ

**ຜູ້ໃຫ້ສຳພາດສ່ວນໃຫຍ່ລາຍງານວ່າສະມາຊິກຂອງຊຸມຊົນຂອງເຂົາເຈົ້າໄດ້ຮັບການຊ່ວຍເຫຼືອຈາກໜ່ວຍງານຕ້ານໄພພິບັດຂອງລັດຖະບານ, ຕົ້ນຕໍແມ່ນຜູ້ທີ່ຖືກໄພນ້ຳຖ້ວມແລະໄຟໄຫມ້.** ພວກເຂົາເຈົ້າໄດ້ກ່າວວ່າ ຕາມທຳມະດາແມ່ນໄດ້ຮັບການຊ່ວຍເຫຼືອເປັນອາຫານແລະເຄື່ອງນຸ່ງຫົ່ມເພື່ອຕອບສະຫນອງຄວາມຕ້ອງການໃນໄລຍະສັ້ນ, ແທນທີ່ຈະແມ່ນການຊ່ວຍເຫຼືອສຳລັບການຟື້ນຟູ ຫຼື ເພື່ອຕອບສະຫນອງຄວາມຕ້ອງການໃນໄລຍະຍາວໃນດ້ານຕ່າງໆ. ຄວາມກັງວົນຫຼັກທີ່ ຜູ້ໃຫ້ສຳພາດ ຍົກຂຶ້ນມາແມ່ນກ່ຽວກັບຄວາມລົ້ມເຫຼວໃນການບຳລຸງຮັກສາລະບົບນ້ຳລິນຂອງບ້ານ ຍ້ອນບໍ່ມີທຶນຊ່ວຍເຫຼືອຈາກລັດ. ຜູ້ໃຫ້ສຳພາດໄດ້ກ່າວວ່າ ທະນາຄານນະໂຍບາຍຂອງລັດປ່ອຍເງິນກູ້ໃຫ້ກຸ່ມຊາວກະສິກອນ ເພື່ອໃຫ້ກຸ່ມເຫຼົ່ານັ້ນເອົາໄປລ້ຽງສັດໃຫຍ່ ແລະ ປູກຝັງ. ຜູ້ໃຫ້ສຳພາດຫຼາຍຄົນໄດ້ກ່າວວ່າ, ເຂົາເຈົ້າບໍ່ໄດ້ຮັບການຊ່ວຍເຫຼືອຈາກລັດຖະບານຈັກຢ່າງເພື່ອຫຼຸດຜ່ອນຜົນກະທົບຈາກໄພເງິນເຟີ້ທີ່ພວມແຜ່ລາມ. ຊຸມຊົນໃນແຂວງພາກໃຕ້ມີແນວໂນ້ມທີ່ຈະໄດ້ຮັບຜົນກະທົບຫຼາຍທີ່ສຸດຈາກຜົນກະທົບຂອງອັດຕາເງິນເຟີ້ຍ້ອນວ່າການປູກຝັງຢູ່ເຂດນີ້ ອາໄສປຸຍເຄມີ, ລົດໄຖນາ ແລະ ເຄື່ອງຈັກຕ່າງໆຂ້ອນຂ້າງຫຼາຍ.

**ຜູ້ໃຫ້ສຳພາດທຸກໆແຂວງທີ່ໄດ້ເຮັດການສຳຫຼວດ ລາຍງານວ່າ ມີເງິນກູ້ ແລະ ທຶນຊ່ວຍເຫຼືອລ້າ ຂອງໂຄງການ ພັດທະນາຂະໜາດນ້ອຍ ເພື່ອສ້າງພື້ນຖານໂຄງລ່າງ ແລະ ອື່ນໆ.** ລາຍລະອຽດກ່ຽວກັບປະເພດຂອງເງິນກູ້ແລະເງິນຊ່ວຍເຫຼືອທີ່ມີຢູ່ໃນແຕ່ລະແຂວງມີດັ່ງຕໍ່ໄປນີ້:

- **ຫຼວງນ້ຳທາ** : ຢູ່ເມືອງ ນາແລ , ຜູ້ໃຫ້ສຳພາດກ່າວວ່າໂຄງການເຂົ້າເຖິງການເງິນ ຂອງອົງການພັດທະນາຂອງປະເທດເຢຍລະມັນ(GIZ) ແລະ ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ທີ່ທະນາຄານໂລກສະໜັບສະໜູນໄດ້ໃຫ້ທຶນກໍ່ສ້າງເສັ້ນທາງເຊື່ອມຕໍ່ບ້ານໃສ່ທາງໃຫຍ່, ສ້ອມແປງໂຮງຮຽນ ແລະ ຕິດຕັ້ງລະບົບ ນ້ຳລິນ. ຜູ້ໃຫ້ສຳພາດກ່າວວ່າຊຸມຊົນຂອງເຂົາເຈົ້າຕ້ອງການການຊ່ວຍເຫຼືອເພີ່ມຕື່ມເພື່ອການກໍ່ສ້າງ ເສັ້ນທາງເຂົ້າບ້ານແລະສ້ອມແປງລະບົບນ້ຳລິນ, ທີ່ປະຈຸບັນມີບໍ່ພຽງພໍຕໍ່ກັບຄວາມຕ້ອງການຂອງຄົນທີ່ອາໄສຢູ່ໃນບ້ານ.

- **ຫຼວງພະບາງ** : ຜູ້ໃຫ້ສຳພາດກ່າວວ່າ ອົງການສຸພະນິມິດໄດ້ໃຫ້ການຊ່ວຍເຫຼືອທີ່ສົ່ງເສີມການລ້ຽງສັດປີກ ເພື່ອເປັນການເພີ່ມຄວາມໝັ້ນຄົງດ້ານສະບຽງອາຫານໃນບ້ານ; ອົງການກາແດງລາວ ໄດ້ບໍລິຈາກເງິນ ເພື່ອສ້າງໂຮງຮຽນ; ແລະ ທະນາຄານນະໂຍບາຍ ກໍໄດ້ປ່ອຍເງິນກູ້ໃນອັດຕາດອກເບ້ຍ 7 ສ່ວນຮ້ອຍ ໃຫ້ແກ່ຊາວກະສິກອນທີ່ຕ້ອງການລ້ຽງສັດເພື່ອເອົາໄວ້ຂາຍ. ຜູ້ໃຫ້ສຳພາດໃນບ້ານໜຶ່ງລາຍງານວ່າ ຊຸມຊົນຂອງເຂົາເຈົ້າໄດ້ຮັບເງິນທຶນສຳລັບກໍ່ສ້າງລະບົບນ້ຳລິນໃຫມ່ຈາກ ທລຍ.

- **ສະຫວັນນະເຂດ** : ຜູ້ໃຫ້ສຳພາດໃຫ້ຮູ້ວ່າ: ທລຍ ໄດ້ໃຫ້ການຊ່ວຍເຫຼືອເພື່ອ ໃຫ້ສະມາຊິກຊຸມ ຊົນສາມາດຕອບສະໜອງ ຄວາມຕ້ອງການດ້ານສະບຽງອາຫານຂອງເຂົາເຈົ້າ ແລະ ທະນາຄານ ນະໂຍບາຍໄດ້ປ່ອຍເງິນກູ້ເພື່ອສົ່ງເສີມການປູກຝັງແລະລ້ຽງສັດ. ໜ່ວຍງານສາທາລະນະສຸກໄດ້ໃຫ້ ການສະໜັບສະໜູນການຈັດຕັ້ງປະຕິບັດວຽກງານສຸຂາພິບານ ແລະ ສຸຂະອະນາໄມ.

- **ສາລະວັນ** : ຜູ້ໃຫ້ສຳພາດບອກວ່າ ອົງການສຸພະນິມິດ ໄດ້ໃຫ້ການຊ່ວຍເຫຼືອທາງດ້ານວັດຖຸ ທີ່ເປັນແນວ ພັນເຂົ້າ ແລະ ພືດຜັກ, ອຸປະກອນການຮຽນ-ການສອນຂອງນັກຮຽນ, ແລະ ອຸປະກອນການແພດໃຫ້ໂຮງໝໍນ້ອຍ, ໃນຂະນະທີ່ ທລຍ ກໍໄດ້ໃຫ້ການຊ່ວຍເຫຼືອເປັນທຶນກ້ອນນ້ອຍໆ ສຳລັບການສ້າງເສັ້ນທາງ, ໂຮງ ຮຽນ, ແລະ ລະບົບການສະໜອງນ້ຳໃຊ້,

- **ເຊກອງ** : ຜູ້ໃຫ້ສຳພາດກ່າວວ່າ ອົງການອາຫານໂລກ ໄດ້ໃຫ້ການຊ່ວຍເຫຼືອດ້ານສະບຽງອາຫານ ແກ່ນັກຮຽນ (ເຂົ້າ, ອາຫານກະປ໋ອງ ແລະ ຖົ່ວຕ່າງໆ) ໃນໄລຍະທີ່ສົ່ງມອບໂຄງການອາຫານກາງເວັນໃນໂຮງ ຮຽນ ໃຫ້ລັດຖະບານສືບຕໍ່ຈັດຕັ້ງປະຕິບັດ. ອົງການແຄປະຈຳ ສປປ ລາວ ໃຫ້ການສະໜັບສະໜູນ ວຽກງານລ້ຽງແບ້ ແລະ ລ້ຽງສັດນ້ຳ.
- **ອັດຕະປື** : ຜູ້ໃຫ້ສຳພາດກ່າວວ່າ ທລຍ ໃຫ້ການສະໜັບສະໜູນການກໍ່ສ້າງ ແລະ ບຳລຸງຮັກສາລະບົບນ້ຳບາດານ ແລະ ເສັ້ນທາງເຂົ້າບ້ານ; ອົງການຮ່ວມມືສາກົນຂອງ ສ.ເກົາຫຼີ (KOICA) ໄດ້ໃຫ້ການຊ່ວຍເຫຼືອເພື່ອການກຽມພ້ອມຮັບມືກັບໄພພິບັດ ແລະ ຕ້ານທານກັບສະພາບການປ່ຽນແປງຂອງດິນຟ້າອາກາດ ໃຫ້ແກ່ຊຸມຊົນໃນເຂດຊົນນະບົດຕາມລຳນ້ຳເຊກອງ .

### 3.4 ການສື່ສານ

**ການສຳຫຼວດນີ້ພົບວ່າ: ການປະຊຸມ ແລະ ການກະຈາຍສຽງ ຢູ່ຂັ້ນບ້ານແມ່ນຊ່ອງທາງຫຼັກໃນການສື່ສານກັບສາທາລະນະຊົນ, ໃນຂະນະທີ່ຄອບຄົວທີ່ມີອິນເຕີເນັດມີແນວໂນ້ມທີ່ຈະໃຊ້ສື່ສັງຄົມເພື່ອໃຫ້ໄດ້ຂ່າວສານທີ່ຄົບຖ້ວນ ແລະ ທັນກັບສະພາບການ.** ຜູ້ໃຫ້ສຳພາດໃນທຸກໆແຂວງກ່າວວ່າລະບົບການລາຍງານບັນຫາຂອງທາງການຍັງບໍ່ທັນໄດ້ຜົນເຕັມສ່ວນ. ສ່ວນຫຼາຍແລ້ວ, ບໍ່ມີການຕໍານິສິ່ງຂ່າວ ຫຼື ຕອບກັບຈາກເຈົ້າເມືອງ ຫຼັງຈາກທີ່ປະຊາຊົນໄດ້ລາຍງານບັນຫາຕໍ່ກັບເຈົ້າເມືອງຜ່ານນາຍບ້ານ. ດ້ວຍເຫດນີ້, ປະຊາຊົນຈຶ່ງຕັດສິນໃຈລໍຖ້າລາຍງານບັນຫາໂດຍກົງຕໍ່ເຈົ້າໜ້າທີ່ຈາກຫ້ອງການປົກຄອງແຂວງ ໃນເວລາທີ່ພວກເຂົາເຈົ້າລົງຢ້ຽມຢາມບ້ານປະຊາຊົນ. ສະນັ້ນ, ການກະຈາຍສຽງ ແລະ ການປະຊຸມຂັ້ນບ້ານແມ່ນຊ່ອງທາງຫຼັກເພື່ອປະກາດຂ່າວຕ່າງໆໃນຊຸມຊົນຢູ່ໃນເຂດບ້ານຊົນນະບົດ ທີ່ບໍ່ມີໂທລະໂຄ່ງ ແລະ ລະບົບກະຈ່າຍສຽງຢູ່ໃນບ້ານ. ຜູ້ໃຫ້ສຳພາດສ່ວນໃຫຍ່ທີ່ສາມາດເຂົ້າເຖິງອິນເຕີເນັດກ່າວວ່າເຟສບຸກ ແມ່ນແຫຼ່ງຂໍ້ມູນຫຼັກຂອງພວກເຂົາເພື່ອເຂົ້າເຖິງຂ່າວສານການແຜ່ລະບາດຂອງພະຍາດ ໂຄວິດ-19. ພວກເຂົາ ກ່າວວ່າຂ່າວທີ່ໄດ້ຮັບ ຜ່ານເຟສບຸກແມ່ນທັນກັບສະພາບການແລະຄົບຖ້ວນກວ່າຂ່າວທີ່ຄະນະສະເພາະກິດຕ້ານພະຍາດໂຄວິດ-19 ປະກາດ, ແຕ່ວ່າຂໍ້ມູນທາງເຟສບຸກກໍມີແຕ່ປະຊາຊົນຊຸມຊົນທີ່ມີອິນເຕີເນັດທີ່ເຂົ້າເຖິງໄດ້. ຜູ້ໃຫ້ສຳພາດຈາກຫຼາຍແຂວງພາກໃຕ້ກ່າວວ່າ, ໃນຂະນະທີ່ ສະມາຊິກຊຸມຊົນມີຄວາມສົນໃຈກ່ຽວກັບຂ່າວການແຜ່ລະບາດ ຂອງພະຍາດໂຄວິດ-19 ໃນປີທຳອິດ (2020), ຮອດປີ 2021, ເຂົາເຈົ້າກໍຢຸດຕາມຂ່າວເຫຼົ່ານັ້ນ. ຜູ້ໃຫ້ສຳພາດຈາກ ແຂວງເຊກອງ ແລະ ອັດຕະປື ສ່ວນໃຫຍ່ບອກວ່າ ໃນເວລາທີ່ເຮັດການສຳຫຼວດນີ້, ປະຊາຊົນມີຄວາມສົນໃຈຂ່າວກ່ຽວກັບລາຄານ້ຳມັນ ແລະ ອັດຕາແລກປ່ຽນເງິນບາດ ຂອງປະເທດໄທ ຫລາຍຂຶ້ນ, ເພາະວ່າ ປຸ໋ຍ ແລະ ເຄື່ອງໃຊ້ໃນການກະເສດທີ່ເຂົາເຈົ້າໃຊ້ສ່ວນຫຼາຍແມ່ນນຳເຂົ້າຈາກປະເທດໄທ, ສະນັ້ນຂ່າວນີ້ ມີຄວາມກ່ຽວຂ້ອງກັບພວກເຂົາຫຼາຍກວ່າ.

# 4. ການມີສ່ວນຮ່ວມຂອງປະຊາຊົນ

## 4.1 ຄວາມເພິ່ງພໍໃຈ ແລະ ຄວາມຄາດຫວັງກ່ຽວກັບໂຄງລ່າງພື້ນຖານ, ການບໍລິການ, ແລະ ການຊ່ວຍເຫຼືອຂອງລັດ

**ພື້ນຖານໂຄງລ່າງໃນຊຸມຊົນ:** ຜູ້ໃຫ້ສຳພາດຫຼາຍຄົນໃນແຂວງພາກໃຕ້ຈົ່ມກ່ຽວກັບຄຸນນະພາບ ແລະ ຄວາມພ້ອມ ຂອງໂຄງລ່າງພື້ນຖານໃນຊຸມຊົນ. ຜູ້ໃຫ້ສຳພາດຄົນໜຶ່ງບອກວ່າ: ໃນຂະນະທີ່ການສ້ອມແປງເສັ້ນທາງເຂົ້າບ້ານໄດ້ສຳເລັດແລ້ວ, ຄຸນນະພາບຂອງເສັ້ນທາງບໍ່ເປັນທີ່ເພິ່ງພໍໃຈປານໃດ, ລະດັບຂອງເສັ້ນທາງຕ່ຳກວ່າ ທົ່ງນາ ທີ່ຢູ່ອ້ອມຂ້າງ, ເຮັດໃຫ້ໜ້າທາງຖືກນ້ຳຖ້ວມ ແລະ ແຊ່ນ້ຳ. ສ່ວນຢູ່ພາກໃຕ້, ຜູ້ໃຫ້ສຳພາດບອກວ່າ: ມີເສັ້ນທາງເຂົ້າບ້ານທີ່ບໍ່ໄດ້ຄຸນນະພາບ, ເຮັດໃຫ້ການສັນຈອນໄປມາຍາກ ຫຼື ບໍ່ສາມາດໄປມາໄດ້ໃນລະດູຝົນ. ກົງກັນຂ້າມ, ຜູ້ໃຫ້ສຳພາດບາງຄົນຈາກພາກເໜືອສະແດງຄວາມພໍໃຈກັບໂຄງລ່າງພື້ນຖານທີ່ລັດລົງທຶນ ທັງ

ໃນດ້ານຄຸນນະພາບ ແລະປະສິດທິພາບ, ເຊິ່ງຜູ້ໃຫ້ສຳພາດເຫຼົ່ານີ້ໄດ້ກ່າວເຖິງການເຮັດວຽກສ້ອມແປງໂຄ່ງລ່າງພື້ນຖານຕ່າງໆເຊັ່ນ: ທັງເສັ້ນທາງ, ໂຮງຮຽນ, ແລະ ລະບົບນ້ຳລິນ. ພວກເຂົາເຈົ້າໄດ້ກ່າວວ່າສະມາຊິກຂອງຊຸມຊົນໃນເຂດຊົນນະບົດໄດ້ປະກອບສ່ວນເປັນແຮງງານໃນການສ້ອມແປງດັ່ງກ່າວ. ຜູ້ໃຫ້ສຳພາດສ່ວນໃຫຍ່ສະແດງເຖິງຄວາມຈຳເປັນ ໃນການ ປັບປຸງສະພາບເສັ້ນທາງ, ລວມທັງເສັ້ນທາງເຂົ້າບ້ານ, ເສັ້ນທາງໃນຕົວເມືອງແລະເສັ້ນທາງໄປສວນຂອງເຂົາເຈົ້າ. ເຂົາເຈົ້າ ໄດ້ເນັ້ນໜັກເປັນພິເສດເຖິງຄວາມຈຳເປັນຂອງການປັບປຸງເສັ້ນທາງເຂົ້າ-ອອກເມືອງ, ເຊິ່ງຈະເຮັດໃຫ້ ຄ່າໃຊ້ຈ່າຍ ໃນການຂົນສົ່ງຫຼຸດໜ້ອຍລົງ ແລະ ດຶງດູດຄົນໃຫ້ມາຄ້າຂາຍຫຼາຍຂຶ້ນ.

**ການຮັກສາສຸຂະພາບ:** ຜູ້ໃຫ້ສຳພາດຈາກແຂວງພາກໃຕ້ຫຼາຍຄົນຈົ່ມກ່ຽວກັບຄຸນນະພາບ ແລະ ຄວາມພ້ອມຂອງ ການຮັກສາສຸຂະພາບ. ຜູ້ໃຫ້ສຳພາດໃນ ແຂວງສະຫວັນນະເຂດ ບອກວ່າອຸປະກອນການແພດຂາດເຂີນ ໃນຂະນະທີ່ ຜູ້ທີ່ຢູ່ແຂວງເຊກອງ ບອກວ່າ ເຖິງແມ່ນວ່າຈະເຂົ້າເຖິງການບໍລິການສາທາລະນະສຸກໄດ້, ແຕ່ວ່າການສື່ສານ ລະຫວ່າງ ປະຊາຊົນ, ບໍລິການຮັບຕ້ອນ ແລະ ປິ່ນປົວ ຍັງບໍ່ເປັນທີ່ເພິ່ງພໍໃຈ. ຜູ້ໃຫ້ສຳພາດບອກວ່າຢາກໃຫ້ມີພະນັກງານແພດທີ່ມີຄຸນວຸດທິແລະອຸປະກອນການແພດທີ່ໃຊ້ໄດ້ດີຢູ່ໃນໂຮງຫມໍເມືອງແລະໂຮງໝໍນ້ອຍ. ຜູ້ໃຫ້ສຳພາດທັງໝົດເວົ້າວ່າ ໂຮງໝໍນ້ອຍເປັນບ່ອນຫຼັກທີ່ເຂົາເຈົ້າ ໄປໃນເວລາທີ່ຕ້ອງການປິ່ນປົວສຸຂະພາບ. ເຂົາເຈົ້າໃຫ້ຮູ້ວ່າ: ອາສາສະມັກສາທາລະນະສຸກບ້ານ (ອສບ) ກໍໄດ້ໃຫ້ບໍລິການສາທາລະນະສຸກໃນໄລຍະທີ່ມີການລະບາດ ຂອງພະຍາດໂຄວິດ-19, ເຜີຍແຜ່ຂໍ້ມູນຂ່າວສານ, ແຈກຢາຍຜ້າອັດປາກອັດດັງ ແລະ ອຸປະກອນປ້ອງກັນພະຍາດໂຄວິດ, ພ້ອມທັງລາຍງານສະພາບການແຜ່ລະບາດໃນບ້ານໃຫ້ພະນັກງານສາທາລະນະສຸກຮັບຊາບ. ໂດຍສະເພາະແມ່ນປະຊາຊົນໃນບັນດາບ້ານທີ່ຢູ່ຫ່າງຈາກໂຮງໝໍນ້ອຍ ໄດ້ລະບຸວ່າ ອສບ ມີບົດບາດສຳຄັນໃນໄລຍະປະຕິບັດມາດຕະການສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19. ຜູ້ໃຫ້ສຳພາດຄົນຫນຶ່ງກ່າວວ່າ:

*"ຄົນໃນບ້ານມັກໄປປິ່ນປົວສຸຂະພາບຢູ່ບ່ອນບ້ານທີ່ໃກ້ສຸດເທົ່າທີ່ຈະໃກ້ໄດ້ ເພື່ອເວັ້ນການເດີນທາງ ຍ້ອນວ່າມີມາດຕະການສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ລາຄານ້ຳມັນທີ່ເພີ່ມຂຶ້ນ. ຖ້າພວກເຮົາເປັນຫວັດ, ໄອຫຼືເຈັບທ້ອງ, ພວກເຮົາກໍໄປຫາ ອສບ ເພື່ອຊື້ຢາ. ລາຄາຢາຫຼາຍໂຕໄດ້ເພີ່ມຂຶ້ນຍ້ອນຄວາມຫຍຸ້ງຍາກໃນການເດີນທາງໄປໃນເມືອງ."*

ແມ່ຄົນໜຶ່ງຢູ່ຫຼວງພະບາງ ເວົ້າວ່າ:

*"ຂ້ອຍບໍ່ເຂົ້າໃຈວ່າເປັນຫຍັງໂຮງໝໍນ້ອຍຈຶ່ງມັກບໍ່ມີຢາເລື້ອຍໆ, ໂດຍສະເພາະ ຢາ ດີຫວັດ ແລະ ທິບພີ້ ຊະນິດນ້ຳ* [ຢາທີ່ໃຊ້ໃນການປິ່ນປົວເດັກນ້ອຍທີ່ເປັນຫວັດ] *ແລະ ອາມ໋ອກຊີລີນ. ຂ້ອຍມີລູກນ້ອຍອາຍຸຕ່ຳກວ່າຫ້າປີ. ປົກກະຕິຖ້າມີຢາຢູ່ໂຮງໝໍນ້ອຍ ພວກເຮົາບໍ່ຕ້ອງຈ່າຍຄ່າຢາ ຖ້າພວກເຮົາມີປຶ້ມສຳມະໂນຄອບຄົວ. ພວກເຮົາມີແຕ່ຕ້ອງຈ່າຍຄ່າລົງທະບຽນ 5.000 ກີບ. ແຕ່ຖ້າໂຮງໝໍນ້ອຍບໍ່ມີຢາ, ພະນັກງານແພດຈະບອກພວກເຮົາໃຫ້ໄປຊື້ຢາຢູ່ຮ້ານຂາຍຢາ ເຊິ່ງເຈົ້າຂອງຮ້ານຂາຍຢາສ່ວນຫຼາຍກໍແມ່ນພະນັກງານແພດເອງ."*

**ການສຶກສາ:** ຄຳຮ້ອງຮຽນກ່ຽວກັບດ້ານການສຶກສາ, ທີ່ມີລາຍງານຫຼາຍທີ່ສຸດແມ່ນຄຸນນະພາບຂອງການສິດສອນທີ່ຕ່ຳ. ຜູ້ໃຫ້ສຳພາດຈົ່ມວ່າຄຸນນະພາບການສິດສອນສອນທີ່ຍັງຕ່ຳ ແມ່ນຍ່ອນມີອຸປະກອນການຮຽນການສອນທີ່ຈຳກັດ. ໃນໄລຍະປິດເມືອງ, ທຸກໆໂຮງຮຽນຖືກປິດ, ບໍ່ມີລະບົບການຮຽນການສອນອອນລາຍໃນຊຸມຊົນ. ຜູ້ໃຫ້ສຳພາດຈາກຫຼາຍແຂວງພາກເໜືອໄດ້ຈົ່ມກ່ຽວກັບການຂາດແຄນຄູ ແລະ ຄວາມຕ້ອງການສ້ອມແປງໂຮງຮຽນ. ເຂົາເຈົ້າເວົ້າວ່າເຮືອນຢູ່ໄກຈາກໂຮງຮຽນ ແລະ ຫຍຸ້ງຍາກໃນການເດີນທາງ ເຮັດໃຫ້ອັດຕາການອອກໂຮງຮຽນສູງ ເຊິ່ງສົ່ງຜົນໃຫ້ຄົນໜຸ່ມ ຈຳນວນຫຼວງຫຼາຍ ເຄື່ອນຍ້າຍໄປຊອກວຽກເຮັດງານທຳ ຢູ່ປະເທດໄທ (ແຂວງພາກໃຕ້) ແລະ ຢູ່ກາຊີໂນໃນແຂວງບໍ່ແກ້ວ. ຜູ້ໃຫ້ສຳພາດຍັງເວົ້າວ່າການມີໂຮງຮຽນມັດທະຍົມຕອນຕົ້ນຢູ່ໃນບ້ານຈະມີຊ່ວຍຫຼຸດຜ່ອນຄວາມລຳບາກໃນການເດີນທາງ, ເຊິ່ງເຮັດໃຫ້ອັດຕາການອອກໂຮງຮຽນຫຼຸດລົງ.

ແມ່ຄົນໜຶ່ງຈາກ ແຂວງສະຫວັນນະເຂດ ບອກໃຫ້ຮູ້ວ່າ:

> *"ຢາກໃຫ້ພະນັກງານສຶກສາເມືອງ ແລະ ແຂວງ ຕິດຕາມຄູອາຈານຢ່າງໃກ້ຊິດ. ເຂົາເຈົ້າມັກຈະຂາດສອນ ເພາະວ່າເຂົາເຈົ້າເຮັດວຽກນາເອງ. ພວກເຮົາເຂົ້າໃຈສະພາບຂອງພວກເຂົາ. ເຂົາເຈົ້າບໍ່ມີເງິນຈ້າງຄົນເຮັດນາ. ຄູອາຈານມັກຈະເວົ້າວ່າພວກເຂົາບໍ່ໄດ້ຮັບເງິນເດືອນສາມເດືອນແລ້ວຫຼືດົນກວ່ານັ້ນ"*

**ການສະໜອງນ້ຳປະປາ:** ຜູ້ໃຫ້ສຳພາດຫຼາຍຄົນຈາກຫຼາຍແຂວງພາກໃຕ້ລາຍງານວ່າ ຂາດນ້ຳໃຊ້ຫຼາຍກວ່າຜູ້ທີ່ຢູ່ແຂວງພາກເໜືອ. ພົບວ່າສ່ວນໃຫຍ່ ແມ່ນ ແມ່ຍິງ ແລະ ເດັກຍິງ ທີ່ຮັບຜິດຊອບຫາບຂົນນ້ຳມາໃຊ້ໃນຄົວເຮືອນ. ຜູ້ໃຫ້ສຳພາດຈາກແຂວງພາກໃຕ້ບອກໃຫ້ຮູ້ວ່າ: ຍັງບໍ່ທັນມີນ້ຳປະປາໃຊ້ເປັນປົກກະຕິ, ຊຸມຊົນແມ່ນອາໄສ ແຫຼ່ງນ້ຳທຳມະຊາດ (ນ້ຳໃຕ້ດິນ/ນ້ຳສ້າງ, ນ້ຳຫ້ວຍ) ແລະ ຂາດນ້ຳໃຊ້ໃນລະດູແລ້ງ. ຜູ້ໃຫ້ສຳພາດຈາກແຂວງ ພາກເໜືອຄ່ອນຂ້າງທີ່ຈະລາຍງານກ່ຽວກັບຄວາມຈຳເປັນໃນການບຳລຸງຮັກສານ້ຳໃຊ້ຂອງຊຸມຊົນ.

**ຊີວິດການເປັນຢູ່ ແລະ ລາຍຮັບ:** ຜູ້ໃຫ້ສຳພາດເນັ້ນໜັກຄວາມຕ້ອງການໃຫ້ມີການສົ່ງເສີມດ້ານກະສິກຳຫຼາຍຂຶ້ນ, ໂດຍສະເພາະເພື່ອໃຫ້ສະມາຊິກຊຸມຊົນສາມາດລ້ຽງສັດເພື່ອສ້າງລາຍຮັບໃຫ້ແກ່ຄອບຄົວ. ຜູ້ໃຫ້ສຳພາດໃນເຂດທີ່ເຮັດການສຳຫຼວດສ່ວນໃຫຍ່ຍັງໄດ້ຍົກບັນຫາການກູ້ຢືມເງິນໄລຍະຍາວເພື່ອປັບປຸງດິນ ແລະ ລ້ຽງສັດ . ພວກເຂົາເຈົ້າກ່າວວ່າ ການລົງທຶນໃນການລ້ຽງສັດຂະໜາດໃຫຍ່ຕ້ອງການເງິນກູ້ດອກເບ້ຍຕ່ຳຈາກລັດຖະບານ. ຜູ້ໃຫ້ສຳພາດຈາກເຂດທີ່ມີດິນປູກຝັງໜ້ອຍໄດ້ສະແດງຄວາມຕ້ອງການເງິນກູ້ເພື່ອຂະຫຍາຍເນື້ອທີ່ທົ່ງນາ. ຜູ້ໃຫ້ສຳພາດສ່ວນໃຫຍ່ ບອກວ່າເຂົາເຈົ້າມີອຳນາດໜ້ອຍ ຫຼື ບໍ່ມີເລີຍທີ່ຈະເຈລະຈາ ລາຄາຜະລິດຕະພັນກະເສດທີ່ເຂົາເຈົ້າຜະລິດໄດ້, ຍ້ອນວ່າຜູ້ເກັບຊື້ມີແຕ່ເຈລະຈາລາຄາກັບ ຜູ້ຜະລິດ ແລະ ພໍ່ຄ້າລາຍໃຫຍ່ເທົ່ານັ້ນ. ພວກເຂົາເຈົ້າ ຍັງໄດ້ຈົ່ມ ກ່ຽວກັບການທີ່ບໍ່ມີຕະຫຼາດໃນຊຸມຊົນເພື່ອຂາຍຜະລິດຕະພັນຂອງເຂົາເຈົ້າ. ຜູ້ໃຫ້ສຳພາດໃນທຸກໆເຂດຈົ່ມວ່າ ຄ່າໃຊ້ຈ່າຍສຳລັບ ເຄື່ອງບໍລິໂພກໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ, ເຊິ່ງພວກເຂົາໄດ້ເວົ້າວ່າພວກເຂົາຫວັງວ່າລາຄາທີ່ເພີ່ມຂຶ້ນນີ້ຈະໄດ້ຮັບການຄວບຄຸມໄດ້. ພ້ອມກັນນັ້ນ, ເຂົາເຈົ້າຍັງກ່າວວ່າ, ລາຄາຜະລິດຕະພັນກະເສດ, ໂດຍສະເພາະແມ່ນອ້ອຍຍັງໄດ້ລາຄາຕ່ຳ. ຫຼາຍຄົນໄດ້ຂໍຄວາມຊ່ວຍເຫຼືອຈາກລັດຖະບານ ເພື່ອຊ່ວຍເຂົາເຈົ້າໃນການເຈລະຈາລາຄາກັບຜູ້ຊື້ ຫຼື ບໍລິສັດການຄ້າ ເພື່ອໃຫ້ພວກ ເຂົາຂາຍມັນໄດ້ໃນລາຄາທີ່ສູງຂຶ້ນ.

**ການຊ່ວຍເຫຼືອສັງຄົມ:** ຜູ້ໃຫ້ສໍາພາດລະບຸວ່າ ການຊ່ວຍເຫຼືອສັງຄົມມີຈໍາກັດ. ຕອນທີ່ຊຸມຊົນປະສົບກັບໄພນໍ້າຖ້ວມຢ່າງໜັກໜ່ວງ ໃນປີ 2019, ການກູ້ຊູ້ ແລະ ຊ່ວຍເຫຼືອສຸກເສີນຍັງບໍ່ທັນພຽງພໍເມື່ອທຽບກັບການສູນເສຍ ແລະ ຄວາມເສຍຫາຍດ້ານເສດຖະກິດທີ່ເກີດຂຶ້ນ. ເຖິງພະນັກງານຂັ້ນເມືອງຈະມາເກັບກໍາຂໍ້ມູນກ່ຽວກັບຜົນກະທົບຈາກໄພພິບັດທີ່ປະຊາຊົນປະສົບຢູ່, ແຕ່ກໍຍັງບໍ່ມີການຊ່ວຍເຫຼືອ. ຜູ້ໃຫ້ສໍາພາດສ່ວນໃຫຍ່ ມີຄວາມຄາດຫວັງຕໍ່າຕໍ່ການຊ່ວຍເຫຼືອຂອງລັດຖະບານ . ພວກເຂົາເຈົ້າຍັງກ່າວວ່າ ອໍານາດການປົກຄອງບ້ານຍັງບໍ່ທັນມີງົບປະມານທີ່ຈະປະຕິບັດໂຄງການທີ່ສາມາດຕອບສະໜອງຄວາມຕ້ອງການຂອງພວກເຂົາ.
ຄູສອນໂຮງຮຽນມັດທະຍົມ ແລະ ຊາວສວນມັນຕົ້ນ ເວົ້າວ່າ:

*"ຂ້ອຍບໍ່ຄາດຫວັງວ່າຈະໄດ້ຮັບການຊ່ວຍເຫຼືອຈາກລັດຖະບານ. ມີແຕ່ພະນັກງານວິຊາການເທົ່ານັ້ນທີ່ເຂົ້າມາເຮັດວຽກກັບຄົນໃນບ້ານ, ເຂົາເຈົ້າບໍ່ມີອໍານາດທີ່ຈະຕອບສະໜອງຄວາມຕ້ອງການຂອງພວກເຮົາ. ບັນດາຫົວໜ້າໃຫຍ່ມີແຕ່ສົນໃຈທີ່ຈະໄປຢ້ຽມຢາມເຂດຂຸດຄົ້ນບໍ່ແຮ່ ແລະ ໂຄງການລົງທຶນຂະໜາດໃຫຍ່."*

**ອໍານາດການປົກຄອງບ້ານກ່າວວ່າ ການເກັບລາຍຮັບໄດ້ຫຼຸດລົງຢ່າງຫຼວງຫຼາຍໃນຮອບ 3 ປີນັບຕັ້ງແຕ່ເກີດການລະບາດຂອງພະຍາດໂຄວິດ-19.** ອໍານາດການປົກຄອງບ້ານອາໄສລາຍຮັບເຫຼົ່ານີ້ເພື່ອໃຊ້ໃນວຽກງານບໍລິຫານເຊັ່ນ: ສົ່ງບົດລາຍງານໃຫ້ *ຫົວໜ້າກຸ່ມບ້ານ* (ອໍານາດການປົກຄອງທ້ອງຖິ່ນ), ເຂົ້າຮ່ວມກອງປະຊຸມຢູ່ຫ້ອງ ການປົກຄອງເມືອງ ແລະ ຮັບຕ້ອນພະນັກງານເມືອງທີ່ລົງມາຢ້ຽມຢາມບ້ານ. ໃນເມື່ອບໍ່ມີລາຍຮັບເຫຼົ່ານີ້, ອໍານາດ ການປົກຄອງບ້ານໄດ້ຫັນໄປເກັບເອົາເຂົ້າຈາກຄົວເຮືອນເພື່ອນໍາມາໃຫ້ແກ່ພະນັກງານເຫຼົ່ານັ້ນ. ຜູ້ໃຫ້ສໍາພາດຍອມຮັບວ່າ ໂຄງການພັດທະນາທີ່ຈັດຕັ້ງປະຕິບັດ ກິດຈະກໍາພາຍໃຕ້ການຊີ້ນໍາຂອງພະນັກງານໂຄງການ ຫຼື ຜູ້ໃຫ້ທຶນແມ່ນ ມີປະສິດທິຜົນ ແລະ ຕອບສະໜອງຄວາມຕ້ອງການຂອງເຂົາເຈົ້າໄດ້ດີກວ່າການປະຕິບັດກິດຈະກໍາພາຍໃຕ້ການຊີ້ນໍາ ຂອງພະນັກງານລັດ.

**ການແກ້ໄຂບັນຫາຈາກໄພພິບັດ:** ຜູ້ໃຫ້ສໍາພາດຫຼາຍຄົນເປັນກັງວົນຕໍ່ໄພພິບັດທາງທໍາມະຊາດ, ໂດຍສະເພາະໄພ ນໍ້າຖ້ວມ ແລະ ໄພແຫ້ງແລ້ງ ເຊິ່ງເກີດຂຶ້ນເລື້ອຍໆໃນໄລຍະສອງສາມປີທີ່ຜ່ານມາ, ເຊິ່ງເຮັດໃຫ້ເກີດຄວາມເສຍຫາຍ ທາງດ້ານກະສິກໍາ ແລະ ທີ່ຢູ່ອາໄສຢ່າງຫຼວງຫຼາຍ ໂດຍສະເພາະເຮືອນຊານທີ່ຕັ້ງຢູ່ໃກ້ກັບແມ່ນໍ້າຂອງ. ມີລາຍງານວ່າມີຫຼາຍກໍລະນີທີ່ຖືກຜົນກະທົບ ແລະ ເສຍຫາຍຢ່າງຫຼວງຫຼາຍໃນປີ 2021 ລວມທັງການສູນເສຍຜົນລະປູກຈາກພາຍຸ ແລະ ໝູ. ຜູ້ໃຫ້ສໍາພາດຍັງໄດ້ເວົ້າເຖິງຄວາມເສຍຫາຍທີ່ເກີດຈາກການລະບາດຂອງເພ້ຍເຂົ້າໃນຊຸມຊົນເຂດຊົນນະບົດ.

**ຜູ້ໃຫ້ສໍາພາດໄດ້ກ່າວວ່າ ບໍ່ໄດ້ມີລະບົບເຕືອນໄພລ່ວງໜ້າວ່າຈະມີນໍ້າຖ້ວມກະທັນຫັນໃນຊຸມຊົນຂອງເຂົາເຈົ້າ.** ເຮັດໃຫ້ສະມາຊິກຊຸມຊົນຕ້ອງໄດ້ອີງໃສ່ປະສົບການ ແລະ ຄວາມຮູ້ພື້ນຖານຂອງຕົນເອງເພື່ອຄາດຄະເນ ແລະ ກຽມຮັບມືກັບໄພນໍ້າຖ້ວມດ້ວຍຕົນເອງ. ມີຫຼາຍກໍລະນີທີ່ລາຍງານວ່າຕ້ອງໄດ້ຫນີຕາຍຈາກລະດັບນໍ້າ ທີ່ເພີ່ມຂຶ້ນກະທັນຫັນ. ຜູ້ໃຫ້ສໍາພາດຢູ່ແຂວງພາກໃຕ້ຈົ່ມວ່າ ເມື່ອໃດທີ່ຫວຽດນາມ ປ່ອຍນໍ້າອອກຈາກເຂື່ອນຂອງເຂົາເຈົ້າ ເຮັດໃຫ້ມີໂອກາດສູງທີ່ຈະເກີດໄພນໍ້າຖ້ວມກະທັນຫັນ. ແນວໃດກໍ່ຕາມ, ມີລາຍງານ ຢູ່ ແຂວງເຊກອງ ແລະ ອັດຕະປື, ວ່າພາຍຫຼັງເກີດເຫດເຂື່ອນໄຟຟ້າເຊປຽນ-ເຊນໍ້ານ້ອຍ ແຕກ, ບໍລິສັດໄດ້ຕິດຕັ້ງລະບົບເຕືອນໄພລ່ວງໜ້າຢູ່ໃນບ້ານ. ຜູ້ໃຫ້ສໍາພາດ ແຂວງສາລະວັນ ເວົ້າວ່າ:

*"ປີກາຍນີ້ (2021) ໄດ້ມີລົມພາຍຸແຮງພັດທໍາລາຍເຮືອນຊານບ້ານຊ່ອງຂອງພວກເຮົາ 5 ຫຼື 6 ຫຼັງ. ຂ້ອຍບໍ່ຈື່ຊື່ຂອງລົມພາຍຸນັ້ນປານໃດ. ມີຄົນເວົ້າເລື່ອງຈະມີພາຍຸກ່ອນແລ້ວ, ເພາະມີການແຈ້ງເຕືອນຜ່ານເຟສບຸກ. ຊາວບ້ານບາງຄົນໄດ້ຂຸດຂຸມຂະໜາດໃຫຍ່ [2.5m x 2.5m] ເພື່ອເປັນບ່ອນອາໄສສໍາລັບຜູ້ເຖົ້າແລະເດັກນ້ອຍ ປະມານ 15-20 ຄົນ. ນາຍບ້ານສົ່ງລາຍງານຄວາມເສຍຫາຍໃຫ້ອໍານາດການປົກຄອງເມືອງ ວ່າມີເຮືອນບາງຫລັງເພພັງ, ແຕ່ບໍ່ໄດ້ຮັບການຊ່ວຍເຫຼືອຈາກລັດຖະບານ."*

## 4.2 ສຽງຂອງປະຊາຊົນ ແລະ ການມີສ່ວນຮ່ວມ

**ນາຍບ້ານທີ່ໄດ້ເຂົ້າຮ່ວມການສໍາພາດ ຢັ້ງຢືນວ່າໄດ້ມີການວາງແຜນພັດທະນາບ້ານ ທຸກໆ 5 ປີ ໂດຍມີການຊຸກຍູ້ຈາກພະນັກງານເມືອງ.** ພວກເຂົາເຈົ້າກ່າວວ່າເຂົາເຈົ້າບໍ່ໄດ້ວາງແຜນການປະຈໍາປີ, ເນື່ອງຈາກວ່າບໍ່ມີທຶນເພື່ອປະຕິບັດກິດຈະກໍາ. ໃນບາງແຂວງ, ອໍານາດການປົກຄອງບ້ານບໍ່ມີກອງທຶນເພື່ອລິເລີ່ມ ແລະ ຈັດຕັ້ງປະຕິບັດ ໂຄງການ, ອໍານາດການປົກຄອງບ້ານຈະປະຕິບັດກິດຈະກໍາກໍ່ຕໍ່ເມື່ອໄດ້ຮັບຄໍາສັ່ງແນະນໍາຈາກ ຂັ້ນເທິງເທົ່ານັ້ນ. ຖ້າບໍ່ມີຄໍາສັ່ງແນະນໍາດັ່ງກ່າວ, ຄະນະບ້ານມີແຕ່ສຸມໃສ່ການເຮັດຢູ່ຫາກິນຂອງຕົນເອງ. ຜູ້ໃຫ້ສໍາພາດຄົນໜຶ່ງກ່າວວ່າ ໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19, ຫ້ອງການບ້ານມີແຕ່ເປີດໃຫ້ບໍລິການ 1 ຊົ່ວໂມງຕໍ່ມື້, ວັນຈັນ ຫາ ວັນສຸກ, ແລະ ມີແຕ່ປະກາດຂ່າວ ແລະ ຂໍ້ມູນກ່ຽວກັບມາດຕະການສະກັດກັ້ນ ແລະ ຊຸກຍູ້ໃຫ້ໄປສັກຢາກັນພະຍາດໂຄວິດ-19.

**ຜູ້ໃຫ້ສໍາພາດບອກວ່າ ສະມາຊິກຊຸມຊົນບໍ່ໄດ້ເຂົ້າຮ່ວມໃນການວາງແຜນພັດທະນາບ້ານ, ຍ້ອນວ່າການປົກຄອງບ້ານແມ່ນຄຸ້ມຄອງແບບແຕ່ເທິງລົງລຸ່ມ.** ນາຍບ້ານ ແລະ ຮອງນາຍບ້ານ ທີ່ໄດ້ເຂົ້າຮ່ວມສໍາຫຼວດ ຍອມຮັບວ່າເຂົາເຈົ້າມີແຕ່ປະຕິບັດຕາມຄໍາສັ່ງຈາກຂັ້ນເທິງເທົ່ານັ້ນ. ກອງປະຊຸມຂັ້ນບ້ານມີແຕ່ຈັດເພື່ອເຜີຍແຜ່ຂໍ້ມູນຂ່າວສານຈາກຫ້ອງການປົກຄອງເມືອງ, ໂດຍສະເພາະແມ່ນຄໍາສັ່ງແນະນໍາກ່ຽວກັບວຽກປົກຄອງ, ລະບຽບການ, ແລະ ຄໍາສັ່ງຕ່າງໆຂອງລັດຖະບານ. ຜູ້ໃຫ້ສໍາພາດທີ່ບໍ່ໄດ້ຢູ່ໃນຄະນະປົກຄອງບ້ານລະບຸວ່າ ບໍ່ໄດ້ເຂົ້າຮ່ວມ ຫຼື ໄດ້ຮັບການປຶກສາຫາລືກ່ຽວກັບບັນຫາທີ່ເກີດຂຶ້ນໃນບ້ານ ແລະ ວິທີການແກ້ໄຂ. ພົບວ່າຊາວບ້ານທີ່ທຸກຍາກ ແລະ ດ້ອຍໂອກາດ ລວມທັງຄົນຕິດເຫຼົ້າ ແລະ ຢາເສບຕິດ ບໍ່ສູ້ໄດ້ເຂົ້າຮ່ວມກອງປະຊຸມບ້ານ. ອໍານາດການປົກຄອງບ້ານລາຍງານວ່າ ມີສະມາຊິກໃນຊຸມຊົນປະມານ 30 ສ່ວນຮ້ອຍເທົ່ານັ້ນ ທີ່ໄດ້ເຂົ້າຮ່ວມການວາງແຜນບ້ານ ແລະ ກໍ່ຍັງແມ່ນຄົນດຽວກັນທີ່ໄດ້ເຂົ້າຮ່ວມກອງປະຊຸມບ້ານເປັນປະຈໍາ.

**ຜູ້ໃຫ້ສໍາພາດກ່າວວ່າ ປະຊາຊົນໃນບ້ານຊົນນະບົດຕ້ອງການໃຫ້ພະນັກງານຮັບຟັງຄໍາເຫັນຂອງເຂົາເຈົ້າ ແລະ ແກ້ໄຂບັນຫາທີ່ມີຄວາມຈໍາເປັນຕ້ອງໄດ້ແກ້ໄຂ.** ຜູ້ໃຫ້ສໍາພາດບອກໃຫ້ຮູ້ວ່າ ກອງປະຊຸມຂັ້ນບ້ານທີ່ຈັດປະຈໍາມີສອງຈຸດປະສົງຕົ້ນຕໍ: ເພື່ອປຶກສາຫາລືກ່ຽວກັບການເຄື່ອນໄຫວຂອງບ້ານ ຫຼື ເພື່ອເຜີຍແຜ່ແຈ້ງການ ແລະ ນະໂຍບາຍຈາກປົກຄອງເມືອງ, ແຂວງ ຫຼື ສູນກາງ. ຕາມຫຼັກແລ້ວ, ຕາງໜ້າແຕ່ລະຄົວເຮືອນຄວນເຂົ້າຮ່ວມກອງປະຊຸມບ້ານເພື່ອປຶກສາຫາລື ຫຼື ການພັດທະນາແຜນກິດຈະກໍາເພື່ອທີ່ຈະໄດ້ຕັດສິນໃຈຮ່ວມກັນ. ສໍາລັບກອງປະຊຸມ ເຜີຍແຜ່ນະໂຍບາຍ, ແຈ້ງການ, ອາດຈະມີແຕ່ຫົວໜ້າໜ່ວຍເຂົ້າຮ່ວມ ແລ້ວໄປເຜີຍແຜ່ເນື້ອໃນກອງ ປະຊຸມໃຫ້ແຕ່ລະຄົວເຮືອນ. ໃນບາງແຂວງ, ຜູ້ໃຫ້ສໍາພາດກ່າວວ່າ, ກ່ອນການຈັດຕັ້ງປະຕິບັດກິດຈະກໍາພັດທະນາຢູ່ໃນບ້ານ, ໄດ້ມີການປຶກສາຫາລືກັບປະຊາຊົນເພື່ອຕັດສິນໃຈຮ່ວມກັນ. ໃນບາງແຂວງພາກເໜືອ, ຜູ້ໃຫ້ສໍາພາດຈົ່ມວ່າ ເຖິງແມ່ນວ່າເຂົາເຈົ້າໄດ້ລາຍງານເລື່ອງຜົນກະທົບຈາກບໍລິສັດຂຸດຄົ້ນບໍ່ແຮ່ ແລະ ບໍລິສັດປູກຝັງ, ໂຄງການທາງລົດໄຟ ລາວ-ຈີນ ແລະ ການລົງທຶນຂອງຕ່າງປະເທດຕໍ່ເຈົ້າໜ້າທີ່ລັດ ແຕ່ພວກເຂົາເຈົ້າບໍ່ຕອບກັບ ຫຼື ແກ້ໄຂບັນຫາ.

**ການສໍາຫຼວດນີ້ພົບວ່າ ໃນຂະນະທີ່ ລັດຖະບານ ກໍາລັງພະຍາຍາມຈັດຕັ້ງປະຕິບັດນະໂຍບາຍເກັບລາຍຮັບ ເພື່ອສົ່ງເສີມການພັດທະນາ ທີ່ຂັບເຄື່ອນໂດຍຊຸມຊົນ, ຊຸມຊົນພັດຍັງບໍ່ສາມາດເກັບລາຍຮັບໄດ້ຢ່າງພຽງພໍເພື່ອໃຫ້ສາມາດປະຕິບັດວຽກພັດທະນາບ້ານໄດ້.** ເພື່ອປະຕິບັດຕາມນະໂຍບາຍ "*ສາມສ້າງ*" ເພື່ອການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ, ລັດຖະບານໄດ້ສ້າງລະບົບເກັບລາຍຮັບໃນລະດັບຊຸມຊົນ. ອີງຕາມຄໍາແນະນໍາຂອງລັດຖະບານ, ອໍານາດການປົກຄອງບ້ານສາມາດແບ່ງເອົາ 10 ສ່ວນຮ້ອຍຂອງລາຍຮັບທັງໝົດ ທີ່ເກັບໄດ້ໄວ້ ເພື່ອເອົາໄປໃຊ້ເຂົ້າໃນການຈັດຕັ້ງປະຕິບັດ ແຜນພັດທະນາບ້ານ. ຢ່າງໃດກໍ່ຕາມ, ຍອດເງິນລາຍຮັບທີ່ບ້ານທຸກຍາກເກັບໄດ້ຍັງຫນ້ອຍຫຼາຍສໍາລັບປະຕິບັດໂຄງການທີ່ຈໍາເປັນໄດ້. ນາຍບ້ານ ທ່ານນຶ່ງ ເວົ້າວ່າ:

*"ໃນ 1 ປີ ພວກເຮົາເກັບພາສີທີ່ດິນ, ການຂາຍງົວ ແລະ ເຄື່ອງປ່າຂອງດົງ ໄດ້ປະມານ 1 ລ້ານກີບເທົ່ານັ້ນ".*

ນາຍບ້ານ ອີກທ່ານນຶ່ງ ເວົ້າວ່າ:

*"ເຖິງແມ່ນວ່າພວກເຮົາຈະເກັບລາຍຮັບຈໍານວນໜຶ່ງຈາກກໍາມະກອນບໍ່ຄໍາ, ສວນກ້ວຍ, ແລະ ຮ້ານຄ້າໃນບ້ານ; ແລ້ວນໍາໃຊ້ເງິນທີ່ເກັບໄດ້ນີ້ສ້ອມແປງຫ້ອງການບ້ານ ແລະ ລະບົບສະໜອງນໍ້າໃຊ້ໃນຊຸມຊົນ, ແຕ່ບໍ່ມີງົບປະມານຫຼາຍພໍທີ່ຈະແກ້ໄຂບັນຫາໃຫຍ່ໆເຊັ່ນ: ສ້ອມແປງຖະໜົນຫົນທາງໃນບ້ານ, ສ້ອມແປງໂຮງຮຽນ ແລະ ອື່ນໆ."*

## 5. ພາກສະຫຼຸບ

**ການສໍາຫຼວດພົບວ່າປະຊາຊົນໃນທຸກໆບ້ານທີ່ໄດ້ເຮັດການສໍາຫຼວດປະສົບກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ ທີ່ໄດ້ຮັບຜົນກະທົບຈາກ ການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ວິກິດເງິນເຟີ້ທີ່ກໍາລັງແຜ່ລາມ, ເຊິ່ງສົ່ງຜົນສະທ້ອນຕໍ່ການຮັກສາສຸຂະພາບ ແລະ ສະພາບເສດຖະກິດ - ສັງຄົມໂດຍລວມ.** ຄວາມສໍາພັນລະຫວ່າງປະຊາຊົນ ແລະ ຜູ້ໃຫ້ການບໍລິການສາທາລະນະສຸກຍັງບໍ່ແໜ້ນແຟ້ນ ແລະ ຊຸມຊົນບໍ່ມີຄວາມເປັນເຈົ້າການໃນການຕັດສິນໃຈ, ໝາຍຄວາມວ່າ ອໍານາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນຂາດອໍານາດ ແລະ ມີຄວາມສາມາດທີ່ຈໍາກັດໃນການປະຕິບັດງານ. ຜົນກະທົບທາງລົບຕໍ່ການສຶກສາ, ການຈ້າງງານ, ສຸຂະພາບຮ່າງກາຍ ແລະ ຈິດໃຈ ແລະ ສະຫວັດດີການຂອງຊຸມຊົນ ຍັງມີຢູ່.

**ອັດຕາເງິນເຟີ້ທີ່ສູງ ແລະ ການເພີ່ມຂຶ້ນຂອງລາຄານໍ້າມັນເຊື້ອໄຟ ແລະ ອາຫານ** ໄດ້ສົ່ງຜົນກະທົບຕໍ່ຊຸມຊົນຢູ່ຂັ້ນທ້ອງຖິ່ນຫຼາຍກວ່າການແຜ່ລະບາດຂອງພະຍາດໂຄວິດ. ໂດຍສະເພາະແມ່ນວິກິດການດ້ານເສດຖະກິດທີ່ໄດ້ສົ່ງຜົນກະທົບທາງລົບຢ່າງໃຫຍ່ຫຼວງຕໍ່ຊາວກະສິກອນເພາະເຮັດໃຫ້ຕ້ອງເພີ່ມຕົ້ນທຶນ. ໃນບາງບ້ານ, ລາຄານໍ້າມັນເຊື້ອໄຟໄດ້ເພີ່ມຂຶ້ນ 2 ເທົ່າທຽບໃສ່ລະດູການປູກຝັງໃນປີຜ່ານມາ. ເຖິງປານນັ້ນ, ຄ່າແຮງງານກໍາມະກອນທີ່ເຮັດວຽກກະສິກໍາໄດ້ເພີ່ມຂຶ້ນພຽງແຕ່ຫນ້ອຍດຽວ, ເຈົ້າຂອງສວນ ແລະ ນາຍຈ້າງບໍ່ສາມາດເພີ່ມຄ່າຈ້າງໃຫ້ເຂົາເຈົ້າຕື່ມອີກໄດ້. ຊາວບ້ານໄດ້ຫຼຸດຜ່ອນປະລິມານອາຫານການກິນຂອງເຂົາເຈົ້າລົງ, ໂດຍສະເພາະອາຫານທີ່ເຄີຍຊື້ຈາກຕະຫຼາດ ແລ້ວຫັນມາປູກກິນເອງ. ດັ່ງນັ້ນ, ຊາວນາທີ່ປູກເຂົ້າໄດ້ບໍ່ພໍກິນໃນຄົວເຮືອນຕ້ອງຫັນມາ

ກິນເຂົ້າໜ້ອຍ ລົງ ແລະ ກິນສາລີ ແລະ ມັນດ້າງເສີມ ເຊິ່ງມີສານອາຫານໜ້ອຍກວ່າ. ຜູ້ໃຫ້ສຳພາດສ່ວນໃຫຍ່ລາຍງານວ່າ ປະຊາຊົນໃນບ້ານໄດ້ພາກັນໄປຊອກອາຫານຈາກປ່າຫຼາຍຂຶ້ນ ເພື່ອຮັບມືກັບບັນຫາລາຄາອາຫານທີ່ເພີ່ມຂຶ້ນ. ເຂົາເຈົ້າຍັງບອກໃຫ້ຮູ້ຕື່ມອີກວ່າ ຄົວເຮືອນທີ່ລ້ຽງສັດປີກ ແລະ ປູກຜັກ ກິນເອງມີຈຳນວນເພີ່ມຂຶ້ນ. ຜູ້ໃຫ້ສຳພາດຫຼາຍຄົນເວົ້າວ່າ ວຽກງານທີ່ໃຫ້ຄ່າຈ້າງເປັນເງິນມີໜ້ອຍລົງ, ພໍ່ຄ້າຄົນກາງທີ່ມາຮັບຊື້ເຄື່ອງປ່າຂອງດົງຢູ່ບ້ານກໍ່ຫຼຸດລົງ ແລະ ສາມາດການເຂົ້າເຖິງການບໍລິການ ສຸຂະພາບທີ່ໄດ້ຄຸນນະພາບໜ້ອຍລົງ.

**ຜົນການສຳຫຼວດນີ້ຊີ້ໃຫ້ເຫັນວ່າ ມີຄວາມຕ້ອງການໃຫ້ຂະແໜງສາທາລະນະສຸກ ເຮັດວຽກຮ່ວມກັບອຳນາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນຫຼາຍຂຶ້ນ ເພື່ອແກ້ໄຂບັນຫາການຮັກສາສຸຂະພາບ.** ພົບວ່າ ການປິ່ນປົວ ສຸຂະພາບ ຢູ່ໂຮງໝໍນ້ອຍ ແລະ ໂຮງໝໍເມືອງຍັງມີຄວາມຈຳກັດ ທັງດ້ານຄຸນນະພາບ ແລະ ຄວາມພ້ອມ, ມີພຽງແຕ່ການບໍລິການຂັ້ນພື້ນຖານເທົ່ານັ້ນ. ສະມາຊິກຂອງຊຸມຊົນໃນເຂດຊົນນະບົດມີແນວໂນ້ມ ທີ່ຈະປິ່ນປົວ ຕົນເອງດ້ວຍການຊື້ຢາກິນເອງ ແລະ ການປິ່ນປົວແບບພື້ນເມືອງ. ເຂົາເຈົ້າອາດຈະໄປໂຮງໝໍແຕ່ໃນກໍລະນີທີ່ເຈັບປ່ວຍແຮງ ແລະ ກໍລະນີທີ່ປິ່ນປົວດ້ວຍຕົນເອງບໍ່ສຳເລັດເທົ່ານັ້ນ, ໂດຍສະເພາະແມ່ນປະຊາຊົນທຸກຍາກໃນບ້ານຫ່າງໄກສອກຫຼີກທີ່ຢູ່ໄກຈາກໂຮງໝໍ. ເຖິງແມ່ນວ່າບາງຄັ້ງປະຊາຊົນຈະໄດ້ຮັບຢາຟຣີຈາກໂຮງໝໍນ້ອຍ, ແຕ່ ພັດຍັງມີລາຍງານວ່າໂຮງໝໍນ້ອຍຂາດຢາພື້ນຖານ, ໃນກໍລະນີທີ່ເຂົາເຈົ້າຖືກບັງຄັບໃຫ້ຊື້ຈາກຮ້ານຂາຍຢາ. ສິ່ງດັ່ງກ່າວ ໄດ້ຊີ້ໃຫ້ເຫັນວ່າ, ລັດຖະບານຕ້ອງ ປັບປຸງຄຸນນະພາບການບໍລິການດ້ານສາທາລະນະສຸກໃຫ້ດີຂຶ້ນ ໂດຍຮັບປະກັນວ່າຈະສາມາດສະໜອງຢາຢູ່ໂຮງໝໍນ້ອຍ ແລະ ໂຮງໝໍເມືອງໃຫ້ພຽງພໍ. ນອກນັ້ນ,ຍັງຕ້ອງໄດ້ໃຫ້ບໍລິການສຸຂະພາບເຄື່ອນທີ່ ໃນຊຸມຊົນທີ່ມີຄົນຊົນເຜົ່າ ແລະ ຫ່າງໄກສອກຫຼີກ, ເຜີຍແຜ່ຄວາມຮູ້ກ່ຽວກັບການປິ່ນປົວພະຍາດທີ່ຈະຊ່ວຍຫຼຸດຜ່ອນການເຈັບປ່ວຍທີ່ຮຸນແຮງຂຶ້ນ.

**ຜົນການສຳຫຼວດນີ້ຍັງຊີ້ໃຫ້ເຫັນວ່າຈຳເປັນຕ້ອງມີມາດຕະການເພື່ອຊ່ວຍໃຫ້ຄົນໜຸ່ມ ສືບຕໍ່ຮຽນໜັງສືໄດ້ຍາວນານຫຼາຍຂຶ້ນ, ເນື່ອງຈາກວ່າໂອກາດສຳລັບຄົນທີ່ອອກໂຮງຮຽນຈະໄດ້ຮັບການຈ້າງງານແມ່ນຈຳກັດຫຼາຍ.** ປັດໄຈທີ່ພາໃຫ້ ອັດຕາການອອກໂຮງຮຽນສູງແມ່ນຍ້ອນວ່າຄຸນນະພາບການສຶກສາຕ່ຳ ແລະ ມີຄວາມຫຍຸ້ງຍາກໃນການເດີນທາງໄປໂຮງຮຽນ. ຄົນໜຸ່ມທີ່ອອກໂຮງຮຽນເພື່ອຊອກວຽກເຮັດໂດຍທົ່ວໄປແລ້ວຈະໄດເຮັດ ແຕ່ວ່າໄດ້ຄ່າຈ້າງຕ່ຳ. ສະນັ້ນ, ຈຶ່ງຈຳເປັນຕ້ອງເລັ່ງໃຫ້ມີວິທີການການປະຕິບັດນະໂຍບາຍ ທີ່ເໝາະສົມ ເພື່ອຊ່ວຍຢຸດການອອກໂຮງຮຽນຂອງຄົນ ໜຸ່ມ ແລະ ຊຸກຍູ້ການພັດທະນາຊັບພະຍາກອນມະນຸດໃນໄລຍະຍາວ.

**ຜົນການສຳຫຼວດນີ້ພົບວ່າປະຊາຊົນໃນເຂດຊົນນະບົດຕ້ອງການ ການຊ່ວຍເຫຼືອດ້ານວິຊາການ ແລະ ການເງິນຕື່ມອີກເພື່ອຊ່ວຍໃຫ້ເຂົາເຈົ້າເຮັດກະສິກຳທີ່ໄດ້ຜົນຜະລິດຫຼາຍ, ສາມາດເຂົ້າເຖິງຕະຫຼາດໄດ້ດີຂຶ້ນ, ແລະ ເພີ່ມອຳນາດໃນການຕໍ່ລອງຂອງ ເຂົາເຈົ້າ.** ຜູ້ໃຫ້ສຳພາດຢູ່ເກືອບທຸກບ່ອນສະແດງຄວາມຕ້ອງການທີ່ຈະເຂົ້າເຖິງເງິນກູ້ໄລຍະຍາວ ເພື່ອເອົາໄປສ້າງຄັງແລະລ້ຽງສັດ. ການລົງທຶນລ້ຽງສັດໃຫຍ່ຕ້ອງການເງິນກູ້ດອກເບ້ຍຕ່ຳຈາກລັດຖະບານ, ສ່ວນຊາວກະສິກອນເຂດທົ່ງພຽງຕ້ອງການທຶນເພື່ອໄປຂະຫຍາຍເນື້ອທີ່ນາ. ຜູ້ໃຫ້ສຳພາດຫຼາຍຄົນບອກວ່າ ເຂົາເຈົ້າ ມີອຳນາດໜ້ອຍທີ່ຈະເຈລະຈາລາຄາຜະລິດຕະພັນກະເສດທີ່ເຂົາເຈົ້າຜະລິດໄດ້, ໂດຍປົກກະຕິແລ້ວຜູ້ເກັບຊື້ມີແຕ່ເຈລະຈາລາຄາກັບຜູ້ຜະລິດຂະໜາດໃຫຍ່ເທົ່ານັ້ນ. ການຊ່ວຍເຫຼືອໃຫ້ຊາວກະສິກອນສ້າງຕັ້ງກຸ່ມຜູ້ຜະລິດເປັນການຊຸກຍູ້ໃຫ້ເຂົາເຈົ້າສາມາດແກ້ໄຂບັນຫານີ້ ເຊິ່ງມັນຊ່ວຍໃຫ້ເຂົາເຈົ້າສາມາດຕໍ່ລອງລາຄາແບບລວມໝູ່. ການຝຶກອົບຮົມຄວາມເປັນຜູ້ນຳ, ການຕໍ່ລອງແລະການເຈລະຈາ, ແລະ ການສຶກສາຂໍ້ມູນການຕະຫຼາດ ສຳລັບກຸ່ມຜູ້ຜະລິດ ເຫຼົ່ານີ້ແມ່ນມີຄວາມສຳຄັນຫຼາຍ.

**ລະດັບການມີສ່ວນຮ່ວມຂອງປະຊາຊົນແມ່ນຈຳກັດຫຼາຍ, ປະຊາຊົນໃນເຂດຊົນນະບົດໄດ້ສະແດງ ຄວາມປາດຖະໜາ ອັນແຮງກ້າທີ່ຢາກໃຫ້ເຈົ້າໜ້າທີ່ເອົາໃຈໃສ່ຄຳຄິດຄຳເຫັນຂອງພວກເຂົາ ແລະ ຊ່ວຍແກ້ໄຂບັນຫາ ທີ່ຈຳເປັນຂອງພວກເຂົາ.** ຜູ້ໃຫ້ສຳພາດ

ສ່ວນຫຼາຍ ໄດ້ອະທິບາຍເຖິງວິທີການຄຸ້ມຄອງແບບເທິງລົງລຸ່ມຢູ່ຂອງອຳນາດການປົກຄອງບ້ານ ທີ່ປະຊາຊົນມີສ່ວນຮ່ວມໜ້ອຍຫຼາຍໃນການສ້າງແຜນພັດທະນາບ້ານ. ເຖິງແມ່ນວ່າ, ລັດຖະບານຈະໄດ້ຈັດຕັ້ງປະຕິບັດລະບົບການເກັບລາຍຮັບ ເພື່ອສົ່ງເສີມການພັດທະນາ ທີ່ຂັບເຄື່ອນໂດຍຊຸມຊົນ, ແຕ່ຊຸມຊົນ ບໍ່ສາມາດເກັບລາຍຮັບໄດ້ຫຼາຍພໍທີ່ຈະປະຕິບັດໂຄງການພັດທະນາບ້ານໄດ້ຢ່າງມີໝາກຜົນ. ຜູ້ໃຫ້ສຳພາດບາງຄົນໄດ້ສະແດງຄວາມເຫັນວ່າ ການປະຊຸມ ແລະ ການປຶກສາຫາລືກ່ຽວກັບການເຄື່ອນໄຫວວຽກງານພັດທະນາບ້ານ ຄວນມີຜູ້ຕາງໜ້າຂອງທຸກຄອບຄົວເຂົ້າຮ່ວມ ເພື່ອໃຫ້ຊຸມຊົນໄດ້ຕັດສິນໃຈຮ່ວມກັນ.

# 6. ເອກະສານຊ້ອນທ້າຍ

## 6.1 ເຂດທີ່ຢູ່ຂອງຜູ້ໃຫ້ສຳພາດ

*Community Survey Participating Districts*



*Lao Poverty Map (Poverty headcount rate by district)*




Source: Lao Statistics Bureau (2022)

## 6.2 ຂໍ້ມູນພື້ນຖານຂອງຜູ້ໃຫ້ສຳພາດ

**Gender**




**Age group**




## 6.3 ຍຸດທະສາດການຮັບມືກັບວິກິດການ

ຊາວບ້ານໄດ້ມີການຮັບມືຕໍ່ກັບສະພາບຄວາມຍຸ້ງຍາກຂອງເສດຖະກິດຕໍ່ການດຳລົງຊີວິດດ້ວຍວິທີການລຸ່ມນີ້:



ການກູ້ຢືມເງິນຂອງຊາວບ້ານ

